ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ ເລກທີ 234 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 22 ທັນວາ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍຊາວໜຸ່ມລາວ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 18 /ສພຊ, ລົງວັນທີ 10 ພະຈິກ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊາວໜຸ່ມລາວ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 25/ຄປຈ, ລົງວັນທີ 08 ທັນວາ 2020.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ກົດໝາຍວ່າດ້ວຍຊາວໜຸ່ມລາວ.

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

**ບຸນຍັງ ວໍລະຈິດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 18 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10/11/20

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊາວໜຸ່ມລາວ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຊາວໜຸ່ມລາວ ໃນວາລະກອງປະຊຸມ ຄັ້ງວັນທີ 10 ພະຈິກ 2020.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຊາວໜຸ່ມລາວ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 86 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 10 ພະຈິກ 2020

# ກົດໝາຍ
# ວ່າດ້ວຍຊາວໜຸ່ມລາວ

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມ ກວດກາ, ການປົກປ້ອງ, ການສົ່ງເສີມ ແລະ ພັດທະນາ ຊາວໜຸ່ມລາວ ບັນດາເຜົ່າ ເພື່ອເຕົ້າໂຮມ ຊາວໜຸ່ມລາວເຂົ້າການຈັດຕັ້ງ, ສຶກສາອົບຮົມ ໃຫ້ມີຄຸນສົມບັດ, ມີຈາລິຍະທຳ, ມີຄ່ານິຍົມທີ່ຖືກຕ້ອງ ແລະ ມີລະບຽບວິໄນ ກາຍເປັນກຳລັງແຮງ, ເປັນຜູ້ສືບທອດພາລະກິດຂອງຊາດ, ແນໃສ່ສ້າງຄວາມສາມັກຄີ, ຍົກສູງນ້ຳໃຈຮັກຊາດ, ມີຄວາມຕື່ນຕົວທ່າວທັນຂອງຊາວໜຸ່ມ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 2 ຊາວໜຸ່ມລາວ**

ຊາວໜຸ່ມລາວ ແມ່ນ ພົນລະເມືອງລາວທີ່ມີອາຍຸແຕ່ ສິບຫ້າປີ ຫາ ສາມສິບຫ້າປີ ໂດຍບໍ່ຈຳແນກເພດ, ເຜົ່າ, ສາສະໜາ, ການເຊື່ອຖື, ອາຊີບ, ຖານະທາງສັງຄົມ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະມາຄົມ** ໝາຍເຖິງ ການຈັດຕັ້ງສັງຄົມ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ ດ້ວຍຄວາມສະໝັກໃຈ, ເຄື່ອນໄຫວເປັນປະຈຳ, ບໍ່ຫວັງຜົນກຳໄລ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງ ສະມາຊິກສະມາຄົມ ຫຼື ຊຸມຊົນ;

2. **ສະໂມສອນ** ໝາຍເຖິງ ການຈັດຕັ້ງສັງຄົມ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ ດ້ວຍຄວາມສະໝັກໃຈ, ເຄື່ອນໄຫວເປັນປະຈຳ, ບໍ່ຫວັງຜົນກຳໄລ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງສະມາຊິກຕົນ;

3. **ກອງອາສາສະໝັກຊາວໜຸ່ມ** ໝາຍເຖິງ ການຈັດຕັ້ງຂອງຊາວໜຸ່ມ ຊຶ່ງປະກອບດ້ວຍ ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ແລະ/ຫຼື ຊາວໜຸ່ມ, ບຸກຄົນ ທີ່ມີຄວາມຕື່ນຕົວສະໝັກໃຈເຂົ້າຮ່ວມວຽກສັງຄົມ;

4. **ກຸ່ມຄົນ** ໝາຍເຖິງ ຈຳນວນສອງຄົນ ຫຼື ຫຼາຍກວ່ານັ້ນຂຶ້ນໄປ ທີ່ເຕົ້າໂຮມກັນດ້ວຍຄວາມສະໝັກໃຈ ທີ່ມີຈຸດປະສົງດຽວກັນ;

5. **ຄ້າຍດັດສ້າງ** ໝາຍເຖິງ ສະຖານທີ່ປະຕິບັດໂທດຂອງນັກໂທດຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

6. **ສູນດັດສ້າງ** ໝາຍເຖິງ ສະຖານທີ່ສຶກສາອົບຮົມ, ດັດສ້າງທາງດ້ານບໍລິຫານ ຕໍ່ຜູ້ກະທຳຜິດທາງອາຍາ ໃນສະຖານເບົາ;

7. **ຄວາມສ່ຽງ** ໝາຍເຖິງ ເຫດ ແລະ ເງື່ອນໄຂ ທີ່ບໍ່ເພິ່ງປາຖະໜາ, ມີຄວາມບໍ່ແນ່ນອນ ແລະ ສາມາດເກີດຂຶ້ນໄດ້ຕະຫຼອດເວລາ;

8. **ສິ່ງເສບຕິດ** ໝາຍເຖິງ ສິ່ງກະຕຸ້ນຕໍ່ລະບົບປະສາດ ຫຼື ອາລົມຈິດ ຈາກ ສິ່ງວັດຖຸ, ພຶດຕິກຳຂອງຄົນ ຫຼື ສື່ສັງຄົມອອນລາຍທີ່ບໍ່ຖືກຕ້ອງ ໂດຍມີຜົນກະທົບທາງລົບຢ່າງຮ້າຍແຮງ ຕໍ່ຮ່າງກາຍ ແລະ ຈິດປະສາດ;

9. **ການຈຳແນກ** ໝາຍເຖິງ ການບໍ່ຍອມຮັບ ຄວາມແຕກຕ່າງ, ຄວາມເທົ່າທຽມ ແລະ ຄວາມສະເໝີພາບ.

## ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບຊາວໜຸ່ມລາວ

ລັດ ວາງນະໂຍບາຍ ແລະ ກົນໄກ ກ່ຽວກັບການຄຸ້ມຄອງ, ການພັດທະນາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມລາວ.

ລັດ ສ້າງໂຄງລ່າງພື້ນຖານ, ສະໜອງ ງົບປະມານ, ວັດຖຸປະກອນ, ເຕັກນິກ ທີ່ຈຳເປັນ ໃຫ້ຊາວໜຸ່ມລາວໄດ້ຍົກລະດັບ ຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ ແລະ ໄດ້ເຄື່ອນໄຫວກິດຈະກຳທີ່ຖືກຕ້ອງຕາມກົດໝາຍ.

ລັດ ຊຸກຍູ້, ສົ່ງເສີມ ຊາວໜຸ່ມລາວ ໃຫ້ໄດ້ຮັບການສຶກສາ, ຝຶກອົບຮົມ, ມີວຽກເຮັດງານທຳ, ໄດ້ຮັບຂໍ້ມູນ ຂ່າວສານ, ເຂົ້າເຖິງການບໍລິການ ທີ່ຖືກຕ້ອງຕາມກົດໝາຍ.

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າຮ່ວມ ແລະ ປະກອບສ່ວນເຂົ້າໃນການປົກປ້ອງ, ສົ່ງເສີມ ແລະ ພັດທະນາຊາວໜຸ່ມລາວ.

## ມາດຕາ 5 ຫຼັກການກ່ຽວກັບການເຄື່ອນໄຫວຂອງຊາວໜຸ່ມລາວ

ຊາວໜຸ່ມລາວ ໃຫ້ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;
2. ສອດຄ່ອງກັບແຜນຍຸດທະສາດການພັດທະນາຊາວໜຸ່ມໃນແຕ່ລະໄລຍະ;
3. ຮັບປະກັນສິດສະເໝີພາບ ທາງດ້ານການເມືອງ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມ;
4. ສອດຄ່ອງກັບໄລຍະຂະຫຍາຍຕົວ ທາງດ້ານຮ່າງກາຍ ແລະ ຈິດໃຈຂອງຊາວໜຸ່ມ;
5. ປະສານສົມທົບກັບຂະແໜງການອື່ນ;
6. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາກລັດ, ເອກະຊົນ ທັງພາຍ ໃນ ແລະ ຕ່າງປະເທດ ທີ່ພົວພັນກັບຊາວໜຸ່ມລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊາວໜຸ່ມ ບົນພື້ນຖານແນວທາງ ນະໂຍບາຍການຕ່າງປະເທດ ຂອງ ສປປ ລາວ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ກິລາ, ສິລະປະ, ວັດທະນະທຳ, ການຄົ້ນຄວ້າວິທະຍາສາດ-ເຕັກນິກ, ເຕັກໂນໂລຊີ, ການຊ່ວຍເຫຼືອ, ການຝຶກອົບຮົມ ແລະ ການຍົກລະດັບຄວາມຮູ້ວິຊາການ, ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ຊາວໜຸ່ມລາວ

**ມາດຕາ 8 ຄວາມສຳຄັນຂອງຊາວໜຸ່ມລາວ**

ຊາວໜຸ່ມລາວ ເປັນກຳລັງແຮງອັນໃຫຍ່ຫຼວງ, ເປັນຜູ້ສືບທອດພາລະກິດຂອງຊາດ, ເປັນກຳລັງປະຈົນ ບານເຂົ້າໃນທຸກຂົງເຂດວຽກງານຂອງຂະແໜງການ ແລະ ທ້ອງຖິ່ນ, ເປັນຜູ້ທີ່ມີຫົວຄິດປະດິດສ້າງ ແລະ ນຳໃຊ້ ເຕັກໂນໂລຊີເຂົ້າໃນການພັດທະນາປະເທດຊາດ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງຂອງຊາວໜຸ່ມແຕ່ ລະປະເພດ.

**ມາດຕາ 9 ປະເພດຊາວໜຸ່ມລາວ**

ການຈັດແບ່ງປະເພດຊາວໜຸ່ມລາວ ແມ່ນ ເພື່ອຄຸ້ມຄອງ, ປົກປ້ອງ, ສົ່ງເສີມ ແລະ ພັດທະນາໃຫ້ເໝາະ ສົມກັບແຕ່ລະປະເພດ.

ຊາວໜຸ່ມລາວ ໄດ້ຈັດເປັນປະເພດ ດັ່ງນີ້:

1. ຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ;
2. ຊາວໜຸ່ມ ນັກຮຽນ, ນັກສຶກສາ;
3. ຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ;
4. ຊາວໜຸ່ມ ລັດຖະກອນ;
5. ຊາວໜຸ່ມ ໃນກຳລັງປະກອບອາວຸດ;
6. ຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ;
7. ຊາວໜຸ່ມ ໃນຂົງເຂດທຸລະກິດ;
8. ຊາວໜຸ່ມ ດ້ອຍໂອກາດ;
9. ຊາວໜຸ່ມ ພິການ;
10. ຊາວໜຸ່ມ ວ່າງງານ;

11. ຊາວໜຸ່ມ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ;

12. ຊາວໜຸ່ມ ທີ່ຕິດສິ່ງເສບຕິດ;

13. ຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ.

ໃນກໍລະນີຈໍາເປັນໂດຍອີງໃສ່ສະພາບຄວາມເປັນຈິງໃນແຕ່ລະໄລຍະ ອາດຈະກໍານົດຊາວໜຸ່ມລາວປະເພດອື່ນອີກກໍໄດ້.

**ມາດຕາ 10 ຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ**

ຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ ແມ່ນ ຜູ້ມີອາຍຸ ສິບຫ້າປີ ຂຶ້ນໄປ ແຕ່ບໍ່ທັນເຖິງ ສິບແປດປີ.

**ມາດຕາ 11 ຊາວໜຸ່ມ ນັກຮຽນ, ນັກສຶກສາ**

ຊາວໜຸ່ມ ນັກຮຽນ, ນັກສຶກສາ ແມ່ນ ຜູ້ກໍາລັງຮຽນ, ສຶກສາຄົ້ນຄວ້າ ຢູ່ສະຖາບັນການສຶກສາໃນລະດັບຕ່າງໆ, ຝຶກງານ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 12 ຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ**

ຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ ແມ່ນ ຜູ້ມີຄວາມຮູ້, ຄວາມສາມາດພິເສດໃນການສຶກສາ, ຄົ້ນຄວ້າ, ການປະດິດສ້າງ ແລະ ການປະຕິບັດຕົວຈິງ.

**ມາດຕາ 13 ຊາວໜຸ່ມ ລັດຖະກອນ**

ຊາວໜຸ່ມ ລັດຖະກອນ ແມ່ນ ຜູ້ໄດ້ຮັບບັນຈຸໃຫ້ເຮັດວຽກ, ເລືອກຕັ້ງ ຫຼື ແຕ່ງຕັ້ງ ໃຫ້ດໍາລົງຕໍາແໜ່ງໃດໜຶ່ງ ໃນອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ຫຼື ໄປປະຈໍາການຢູ່ສໍານັກງານຜູ້ຕາງໜ້າ ສປປ ລາວ ຢູ່ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຊຶ່ງໄດ້ຮັບເງິນເດືອນ ແລະ ເງິນອຸດໜູນຈາກງົບປະມານແຫ່ງລັດ.

**ມາດຕາ 14 ຊາວໜຸ່ມ ໃນກໍາລັງປະກອບອາວຸດ**

ຊາວໜຸ່ມ ໃນກໍາລັງປະກອບອາວຸດ ແມ່ນ ຜູ້ສັງກັດໃນການຈັດຕັ້ງ, ການເຄື່ອນໄຫວ, ຊີ້ນໍາບັນຊາ, ຄຸ້ມຄອງ, ກວດກາ ຂອງກໍາລັງປະກອບອາວຸດປະຊາຊົນ.

**ມາດຕາ 15 ຊາວໜຸ່ມ ກໍາມະກອນ, ກະສິກອນ ແລະ ຊ່າງຫັດຖະກໍາ**

ຊາວໜຸ່ມ ກໍາມະກອນ ແມ່ນ ຜູ້ເຮັດວຽກໃນໂຮງຈັກ, ໂຮງງານ, ຫົວໜ່ວຍທຸລະກິດ, ຜູ້ຮັບເໝົາກໍ່ສ້າງ ແລະ ໄດ້ຮັບຄ່າຕອບແທນ ຕາມສັນຍາແຮງງານ ແລະ ກົດໝາຍ.

ຊາວໜຸ່ມ ກະສິກອນ ແມ່ນ ຜູ້ເຮັດວຽກກ່ຽວກັບກະສິກໍາ ເປັນຕົ້ນ ການປູກຝັງ, ລ້ຽງສັດ, ການປະມົງ.

ຊາວໜຸ່ມ ຊ່າງຫັດຖະກໍາ ແມ່ນ ຜູ້ທີ່ເຮັດວຽກກ່ຽວກັບຫັດຖະກໍາ ເປັນຕົ້ນ ຈັກສານ, ຄວັດ, ແກະສະຫຼັກ, ປັ້ນ, ຫຼໍ່, ຫຍິບ, ປັກ, ຖັກ ແສ່ວ, ຕໍ່າຫູກ, ຕີເຫຼັກ, ຕີເງິນ, ຕີຄໍາ.

**ມາດຕາ 16 ຊາວໜຸ່ມ ໃນຂົງເຂດທຸລະກິດ**

ຊາວໜຸ່ມ ໃນຂົງເຂດທຸລະກິດ ແມ່ນ ຜູ້ເປັນເຈົ້າຂອງກິດຈະການ, ວິສາຫະກິດ ແລະ ຜູ້ເຮັດວຽກ ຢູ່ ຫົວໜ່ວຍທຸລະກິດ ເປັນຕົ້ນ ການຜະລິດ, ການຄ້າ, ການບໍລິການ, ການທ່ອງທ່ຽວ, ທຸລະກຳການເງິນ, ຮ້ານ ສ້ອມແປງ, ຮ້ານເສີມຄວາມງາມ, ຮ້ານຮົມຢາ ແລະ ນວດແຜນບູຮານ.

**ມາດຕາ 17 ຊາວໜຸ່ມ ດ້ອຍໂອກາດ**

ຊາວໜຸ່ມ ດ້ອຍໂອກາດ ແມ່ນ ຜູ້ຂາດເຂີນ ແລະ ມີຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ, ສັງຄົມ, ການສຶກສາ, ສາທາລະນະສຸກ.

**ມາດຕາ 18 ຊາວໜຸ່ມ ພິການ**

ຊາວໜຸ່ມ ພິການ ແມ່ນ ຜູ້ມີຄວາມບົກພ່ອງທາງດ້ານຮ່າງກາຍ, ການເບິ່ງເຫັນ, ການໄດ້ຍິນ ແລະ ການປາກເວົ້າ, ສະຕິປັນຍາ, ຄວາມຈື່ຈຳ ແລະ ດ້ານອື່ນ ບວກກັບສິ່ງກີດຂວາງ ຊຶ່ງເປັນອຸປະສັກໃນການເຄື່ອນໄຫວ ຊີວິດປະຈຳວັນ, ການຮຽນຮູ້ ແລະ ການເຂົ້າຮ່ວມກິດຈະກຳທາງສັງຄົມ ໄດ້ຢ່າງເຕັມສ່ວນ.

**ມາດຕາ 19 ຊາວໜຸ່ມ ວ່າງງານ**

ຊາວໜຸ່ມ ວ່າງງານ ແມ່ນ ຜູ້ທີ່ບໍ່ມີວຽກເຮັດງານທຳ.

**ມາດຕາ 20 ຊາວໜຸ່ມ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ**

ຊາວໜຸ່ມ ທີ່ມີຄວາມສ່ຽງ ແມ່ນ ຜູ້ດຳລົງຊີວິດ, ເຮັດວຽກ, ສຶກສາ, ຄົ້ນຄວ້າ, ທົດລອງ ຢູ່ໃນສະພາບແວດລ້ອມ ແລະ ອາຊີບທີ່ມີຄວາມສ່ຽງ, ຄວາມອັນຕະລາຍ ຕໍ່ຊີວິດ ແລະ ສຸຂະພາບ.

ຊາວໜຸ່ມ ຖືກເຄາະຮ້າຍ ແມ່ນ ຜູ້ໄດ້ຮັບຜົນກະທົບຈາກ ທຳມະຊາດ ແລະ ມະນຸດສ້າງຂຶ້ນ ເປັນຕົ້ນ ໄພພິບັດທາງທຳມະຊາດ, ພະຍາດລະບາດ, ການໃຊ້ຄວາມຮຸນແຮງ, ການຄ້າມະນຸດ, ສິ່ງເສດເຫຼືອສົງຄາມ, ສິ່ງເສບຕິດ, ການປະກອບອາຊີບ, ອຸບປະຕິເຫດ.

**ມາດຕາ 21 ຊາວໜຸ່ມ ທີ່ຕິດສິ່ງເສບຕິດ**

ຊາວໜຸ່ມ ທີ່ຕິດສິ່ງເສບຕິດ ແມ່ນ ຜູ້ເສບ ຫຼື ຊົມໃຊ້ສິ່ງເສບຕິດຢ່າງຕໍ່ເນື່ອງ ແລະ ຂາດບໍ່ໄດ້ ເປັນຕົ້ນ ຢາເສບຕິດ, ທາດເຫຼົ້າ, ສິ່ງມືນເມົາ, ການພະນັນ, ສື່ສັງຄົມອອນລາຍທີ່ບໍ່ຖືກຕ້ອງ ແລະ ບໍ່ເໝາະສົມ.

**ມາດຕາ 22 ຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ**

ຊາວໜຸ່ມ ທີ່ຖືກຄຸມຂັງ ແມ່ນ ຜູ້ຖືກປະຕິບັດໂທດ ຕາມຄຳຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຢູ່ ຄ້າຍດັດສ້າງ.

ຊາວໜຸ່ມ ທີ່ຖືກດັດສ້າງ ແມ່ນ ຜູ້ຖືກສຶກສາອົບຮົມ, ດັດສ້າງທາງດ້ານບໍລິຫານ ຕໍ່ຜູ້ກະທຳຜິດທາງ ອາຍາໃນສະຖານເບົາ ຢູ່ສູນດັດສ້າງ.

# ພາກທີ III
# ການປົກປ້ອງ, ການສົ່ງເສີມ ແລະ ການພັດທະນາຊາວໜຸ່ມລາວ
## ໝວດທີ 1
## ການປົກປ້ອງຊາວໜຸ່ມລາວ

### ມາດຕາ 23 ການປົກປ້ອງຊາວໜຸ່ມລາວ

ການປົກປ້ອງຊາວໜຸ່ມລາວ ແມ່ນ ການນຳໃຊ້ມາດຕະການ, ວິທີການ ໃນການຄຸ້ມຄອງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມລາວ.

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ໃຫ້ການປົກປ້ອງຊາວໜຸ່ມລາວ ຕາມແຕ່ລະປະເພດທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ຕາມແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ໃຫ້ຄຳປຶກສາ ແລະ ສ້າງກົນໄກປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ສຳລັບ ການປົກປ້ອງຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ, ຊາວໜຸ່ມ ພິການ, ຊາວໜຸ່ມ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ ນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24, 25 ແລະ 26 ຂອງກົດໝາຍສະບັບນີ້.

### ມາດຕາ 24 ຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ

ການຈັດຕັ້ງຊາວໜຸ່ມ, ສະຫະພັນແມ່ຍິງລາວ, ການຈັດຕັ້ງສັງຄົມ, ຄອບຄົວ ປົກປ້ອງຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ ດ້ວຍການເອົາໃຈໃສ່ໃນການສຶກສາອົບຮົມ, ຄຸ້ມຄອງການດຳລົງຊີວິດ ແລະ ການເຄື່ອນໄຫວຂອງຊາວໜຸ່ມ ເພື່ອຫຼີກລ່ຽງປາກົດການຫຍໍ້ທໍ້ທີ່ຈະເກີດກັບເຂົາເຈົ້າ, ສ້າງເງື່ອນໄຂໃນການເຄື່ອນໄຫວກິດຈະກຳທີ່ມີຜົນປະໂຫຍດຕໍ່ສັງຄົມ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂການກະທຳຜິດຂອງຊາວໜຸ່ມ.

ສະຖາບັນການສຶກສາ ປົກປ້ອງຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ ດ້ວຍການສ້າງສິ່ງອຳນວຍຄວາມສະດວກໃຫ້ການສຶກສາຮ່ຳຮຽນທີ່ມີຄຸນນະພາບ, ສະກັດກັ້ນການຮຽນແບບສັງຄົມບໍ່ດີ ແລະ ສິ່ງຫຍໍ້ທໍ້ໃນສັງຄົມ.

ຄອບຄົວ ປົກປ້ອງ ຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ ດ້ວຍການສຶກສາອົບຮົມ ເບິ່ງແຍງດູແລ, ໃຫ້ຄວາມຮັກ, ຄວາມອົບອຸ່ນ, ຄວາມສຸກ, ຄວາມສະເໝີພາບ ເພື່ອຫ່າງໄກຈາກສິ່ງເສບຕິດ, ສິ່ງມຶນເມົາ, ສິ່ງລາມົກ, ອະນາຈານ ແລະ ສິ່ງທີ່ຜິດກົດໝາຍ.

### ມາດຕາ 25 ຊາວໜຸ່ມ ພິການ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມພິການ ດ້ວຍກົດໝາຍ, ສຶກສາອົບຮົມ, ໃຫ້ກຽດ, ໃຫ້ຄວາມສະດວກ, ໃຫ້ການດູແລ, ການປິ່ນປົວ, ການປະກອບອາຊີບ, ສະຫວັດດີການສັງຄົມ, ການເຄື່ອນໄຫວກິລາ, ສິລະປະ, ການບໍ່ຈຳແນກ, ບໍ່ລັງກຽດ, ເຢາະເຢີ້ຍ, ສຽດສີ, ກີດກັ້ນ, ປິ່ນທາ ທຸກຮູບແບບ.

**ມາດຕາ 26 ຊາວໜຸ່ມ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ບັນດາອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ປົກປ້ອງຊາວໜຸ່ມ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ ດ້ວຍກົດໝາຍ, ສຶກສາອົບຮົມ, ປຸກຈິດສຳນຶກ, ໃຫ້ຂໍ້ມູນ ຂ່າວສານ, ໃຫ້ຊຸດຕິດແທດ, ໃຫ້ຄຳປຶກສາ, ແນະນຳຜົນຮ້າຍຂອງແຜຍາດ ແລະ ການກະທຳທີ່ບໍ່ຖືກຕ້ອງ ຊຶ່ງຈະພາໃຫ້ເປັນອັນຕະລາຍຕໍ່ຊີວິດ ແລະ ສຸຂະພາບ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃຫ້ກຳລັງໃຈ ແລະ ໃຫ້ການຊ່ວຍເຫຼືອ.

## ໝວດທີ 2
## ການສົ່ງເສີມຊາວໜຸ່ມລາວ

**ມາດຕາ 27 ການສົ່ງເສີມຊາວໜຸ່ມລາວ**

ການສົ່ງເສີມຊາວໜຸ່ມລາວ ແມ່ນ ການໃຫ້ ການສະໜັບສະໜູນ ແລະ ການຊ່ວຍເຫຼືອ.

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ມີຄວາມຮັບຜິດຊອບໃນການສົ່ງເສີມຊາວໜຸ່ມລາວ ຕາມແຕ່ລະປະເພດທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ດ້ວຍການສຶກສາອົບຮົມ, ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ໃຫ້ຊາວໜຸ່ມລາວໄດ້ຮັບການຝຶກຝົນຫຼໍ່ຫຼອມ ແນວຄິດ, ຄຸນສົມບັດ, ທັດສະນະ, ອຸດົມການ ທີ່ຖືກຕ້ອງ ແລະ ມີຄວາມຮູ້, ຄວາມສາມາດດ້ານຕ່າງໆ.

ສຳລັບ ຊາວໜຸ່ມນັກຮຽນ, ນັກສຶກສາ, ຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ, ຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ, ຊາວໜຸ່ມ ວ່າງງານ, ຊາວໜຸ່ມ ທີ່ຕິດສິ່ງເສບຕິດ ແລະ ຊາວໜຸ່ມ ຖືກຄຸມຂັງ ແລະ ຖືກດັດສ້າງ ນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28, 29, 30, 31, 32 ແລະ 33 ຂອງກົດໝາຍສະບັບນີ້.

**ມາດຕາ 28 ຊາວໜຸ່ມ ນັກຮຽນ, ນັກສຶກສາ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ສົ່ງເສີມຊາວໜຸ່ມ ນັກຮຽນ, ນັກສຶກສາ ດ້ວຍການເອົາໃຈໃສ່ໂຄສະນາ ປຸກຈິດສຳນຶກຄ່ານິຍົມ ໃນການຮຽນ, ການສຶກສາ, ການຝຶກອົບຮົມວິຊາຊີບໃດໜຶ່ງ ໂດຍອີງໃສ່ສະພາບ ແລະ ເງື່ອນໄຂຕົວຈິງ ຂອງບຸກຄົນ, ຄອບຄົວ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານ ໃນແຕ່ລະໄລຍະ.

**ມາດຕາ 29 ຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ແລະ ສະຖາບັນການສຶກສາ ສົ່ງເສີມຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ ໃນການ ຄົ້ນຄວ້າ, ຜະລິດ ແລະ ນຳໃຊ້ ເຂົ້າໃນວຽກງານຕົວຈິງ ດ້ວຍການໃຫ້ບຸລິມະສິດ ໃນການຮັບທຶນການສຶກສາ, ເຂົ້າເຖິງແຫຼ່ງທຶນ, ເບ້ຍລ້ຽງ, ຍ້ອງຍໍ ສົມລະເສີນ, ສອບເສັງ

ເພື່ອບັນຈຸປະກອບອາຊີບ ຕາມຄວາມຮູ້, ຄວາມສາມາດ, ສົ່ງເສີມສິ່ງທີ່ປະດິດສ້າງໃໝ່ໃຫ້ມີຜົນປະໂຫຍດຕໍ່ສັງຄົມ ລວມທັງປະຕິບັດນະໂຍບາຍອື່ນທີ່ເໝາະສົມ.

### ມາດຕາ 30 ຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ສົ່ງເສີມຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ ດ້ວຍການວາງນະໂຍບາຍ, ສ້າງສີມືແຮງງານ, ສ້າງທັກສະນະແຮງງານທີ່ຖືກຕ້ອງ, ຄົ້ນຄວ້າ ນຳໃຊ້ວິທະຍາສາດ-ເຕັກນິກ ໃນການປູກ, ການລ້ຽງ, ການຜະລິດ, ປຸງແຕ່ງ ທີ່ຕິດພັນກັບການບໍລິການ ເປັນຕົ້ນ ການຜະລິດກະສິກຳສະອາດ, ກະສິກຳປອດສານພິດ, ພັດທະນາແນວພັນພືດ, ແນວພັນສັດ, ການປູກມອນລ້ຽງມ້ອນ, ຕຳຫູກ ທໍໄໝ, ຄວັດ, ແຕ້ມ, ແກະສະຫຼັກ, ຈັກສານ, ຫຍິບ, ປັກ, ຖັກ ແສ່ວ, ເຄື່ອງປັ້ນດິນເຜົາ.

ລັດ ອອກນິຕິກຳ ໃນການຕັດສິນລາຄາສິນຄ້າກະສິກຳ ແລະ ຫັດຖະກຳ, ຄຸ້ມຄອງ ພາສີ, ອາກອນການສົ່ງອອກ ແລະ ນຳເຂົ້າ ພ້ອມທັງມີນະໂຍບາຍໃຫ້ສິນເຊື່ອແກ່ທຸລະກິດຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ສົ່ງເສີມ ໃຫ້ຜະລິດສິນຄ້າສົ່ງອອກໄປຕ່າງປະເທດ ແລະ ຊົມໃຊ້ຜະລິດຕະພັນພາຍໃນ.

### ມາດຕາ 31 ຊາວໜຸ່ມ ວ່າງງານ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ມີຄວາມຮັບຜິດຊອບຕໍ່ຊາວໜຸ່ມວ່າງງານ ດ້ວຍການໂຄສະນາ ເຜີຍແຜ່ກົດໝາຍທີ່ກ່ຽວຂ້ອງ, ສ້າງທັກສະນະແຮງງານ, ປູກຈິດສຳນຶກ ແລະ ສ້າງຄ່ານິຍົມ ກ່ຽວກັບວິຊາຊີບທີ່ຖືກຕ້ອງ, ເໝາະສົມ ເພື່ອສົ່ງເສີມໃຫ້ເຂົ້າເຖິງຕະຫຼາດແຮງງານ ແລະ ສ້າງງານດ້ວຍຕົນເອງ.

### ມາດຕາ 32 ຊາວໜຸ່ມ ທີ່ຕິດສິ່ງເສບຕິດ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ມີຄວາມຮັບຜິດຊອບຕໍ່ຊາວໜຸ່ມທີ່ຕິດສິ່ງເສບຕິດ ດ້ວຍການຊ່ວຍເຫຼືອເຂົາເຈົ້າໄດ້ຮັບການບຳບັດ, ສຶກສາອົບຮົມແນວຄິດ, ໃຫ້ຄຳແນະນຳ, ໃຫ້ຄຳປຶກສາ, ໃຫ້ຂໍ້ມູນຂ່າວສານ ເພື່ອໃຫ້ຊາວໜຸ່ມດັ່ງກ່າວຕັດໃຈອອກຈາກສິ່ງເສບຕິດ, ຕັ້ງໜ້າຟື້ນຟູສຸຂະພາບໃຫ້ເຂັ້ມແຂງ ເພື່ອສົ່ງເສີມໃຫ້ກາຍເປັນພົນລະເມືອງດີຂອງຊາດ.

### ມາດຕາ 33 ຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງມະຫາຊົນ ແລະ ຄອບຄົວ ມີຄວາມຮັບຜິດຊອບຕໍ່ຊາວໜຸ່ມທີ່ຖືກຄຸມຂັງ ແລະ ຖືກດັດສ້າງ ດ້ວຍການຊ່ວຍເຫຼືອເຂົາເຈົ້າໄດ້ຮັບການສຶກສາອົບຮົມແນວຄິດ, ໃຫ້ຄຳປຶກສາ, ປູກຈິດສຳນຶກ, ມີນະໂຍບາຍເບິ່ງແຍງຊີວິດການເປັນຢູ່, ປິ່ນປົວ ແລະ ຟື້ນຟູສຸຂະພາບ ເພື່ອສົ່ງເສີມໃຫ້ເຂົາເຈົ້າຫັນປ່ຽນແນວຄິດກັບມາເປັນພົນລະເມືອງດີຂອງຊາດ.

## ໝວດທີ 3
## ການພັດທະນາຊາວໜຸ່ມລາວ

### ມາດຕາ 34 ການພັດທະນາຊາວໜຸ່ມລາວ

ການພັດທະນາ ຊາວໜຸ່ມລາວ ແມ່ນ ການປັບປຸງ ແລະ ປ່ຽນແປງ ຈາກອັນເກົ່າກ້າວໄປສູ່ອັນໃໝ່ທີ່ດີກວ່າ.

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ເອົາໃຈໃສ່ພັດທະນາຊາວໜຸ່ມລາວ ຕາມແຕ່ລະປະເພດທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ດ້ວຍການ ໃຫ້ໂອກາດ, ອຳນວຍຄວາມສະດວກ ແລະ ສ້າງເງື່ອນໄຂ ໄດ້ບຳລຸງຮ່າງກາຍ ແລະ ຈິດໃຈໃຫ້ເຂັ້ມແຂງ; ສ້າງແນວຄິດ, ອຸດົມການໃຫ້ມີຄວາມໜັກແໜ້ນ; ຍົກລະດັບ ການສຶກສາ, ພາສາຕ່າງປະເທດ, ການຄົ້ນຄວ້າ ດ້ານເຕັກນິກ, ວິທະຍາສາດ, ເຕັກໂນໂລຊີ, ດ້ານວິຊາຊີບ, ດ້ານວັດທະນະທຳ ເພື່ອໃຫ້ຊາວໜຸ່ມລາວ ມີຄວາມຮູ້, ຄວາມສາມາດ, ມີຈັນຍາບັນ, ຈັນຍາທຳ ແລະ ຄຸນນະທຳ.

ສຳລັບ ການພັດທະນາຊາວໜຸ່ມ ນັກຮຽນ, ນັກສຶກສາ, ຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ, ຊາວໜຸ່ມ ດ້ອຍໂອກາດ, ຊາວໜຸ່ມ ພິການ, ຊາວໜຸ່ມ ທີ່ຕິດສິ່ງເສບຕິດ ແລະ ຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ ນັ້ນ ຍັງຕ້ອງໃຫ້ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35, 36, 37, 38, 39 ແລະ 40 ຂອງກົດໝາຍສະບັບນີ້.

### ມາດຕາ 35 ຊາວໜຸ່ມ ນັກຮຽນ, ນັກສຶກສາ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ພັດທະນາຊາວໜຸ່ມ ນັກຮຽນ, ນັກສຶກສາ ທາງດ້ານຮ່າງກາຍ, ຈິດໃຈ, ສະຕິປັນຍາ, ຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ ເຂົ້າໃນການພັດທະນາວຽກງານຊາວໜຸ່ມ-ເຍົາວະຊົນ.

### ມາດຕາ 36 ຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ບຸກຄົນ ແລະ ນິຕິບຸກຄົນ ມີສ່ວນຮ່ວມໃນການພັດທະນາຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ ດ້ວຍການຝຶກອົບຮົມ, ທັດສະນະສຶກສາ, ຖອດຖອນບົດຮຽນ, ຍົກລະດັບ ຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ ດ້ານກະສິກຳ ແລະ ຫັດຖະກຳ, ນຳໃຊ້ເຕັກນິກ, ວິທະຍາສາດ, ເຕັກໂນໂລຊີ, ປະດິດສ້າງໃໝ່ ໃນການພັດທະນາຜະລິດຕະພັນກະສິກຳ ແລະ ຫັດຖະກຳທີ່ມີຄຸນນະພາບ ເພື່ອສາມາດແຂ່ງຂັນຢູ່ພາຍໃນ ແລະ ຕ່າງປະເທດ.

### ມາດຕາ 37 ຊາວໜຸ່ມ ດ້ອຍໂອກາດ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບໃນການພັດທະນາຊາວໜຸ່ມ

ດ້ອຍໂອກາດ ດ້ວຍການ ປຸກຈິດສຳນຶກ, ການສຶກສາ, ສົ່ງເສີມສຸຂະພາບ, ຝຶກອົບຮົມວິຊາຊີບ, ສະໜອງຂໍ້ມູນຂ່າວສານ, ວັດທະນະທຳ, ຮີດຄອງປະເພນີທີ່ດີງາມ, ວຽກເຮັດງານທຳ, ເປັນເຈົ້າການພັດທະນາ, ສ້າງແຫຼ່ງລາຍຮັບ ໃຫ້ຕົນເອງ ແລະ ຄອບຄົວ.

**ມາດຕາ 38 ຊາວໜຸ່ມ ພິການ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ເອົາໃຈໃສ່ພິເສດໃນການພັດທະນາຊາວໜຸ່ມ ພິການ ດ້ວຍການ ໃຫ້ຄວາມອົບອຸ່ນ, ປຸກຈິດສຳນຶກ, ໃຫ້ການສຶກສາທີ່ເທົ່າທຽມ, ສົ່ງເສີມສຸຂະພາບໃຫ້ແຂງແຮງ, ຝຶກອົບຮົມວິຊາຊີບ ໃຫ້ມີວຽກເຮັດງານທຳ, ມີລາຍຮັບໃຫ້ແກ່ຕົນເອງ ແລະ ຄອບຄົວ ຕາມຄວາມສາມາດ ແລະ ເງື່ອນໄຂຕົວຈິງ.

**ມາດຕາ 39 ຊາວໜຸ່ມ ທີ່ຕິດສິ່ງເສບຕິດ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ເປັນເຈົ້າການໃນການພັດທະນາຊາວໜຸ່ມ ທີ່ຕິດສິ່ງເສບຕິດ ດ້ວຍການຟື້ນຟູສຸຂະພາບ, ສຶກສາອົບຮົມແນວຄິດ, ຝຶກອົບຮົມວິຊາຊີບ, ເຄື່ອນໄຫວກິດຈະກຳເປັນຕົ້ນ ກິລາ, ສິລະປະ, ອອກແຮງງານ, ມີວຽກເຮັດງານທຳ ໃຫ້ກາຍເປັນພົນລະເມືອງດີ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 40 ຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ຄອບຄົວ ມີຄວາມຮັບຜິດຊອບໃນການພັດທະນາຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ ດ້ວຍການ ສຶກສາອົບຮົມ, ຮັກສາສຸຂະພາບ, ຍົກສູງຄຸນນະພາບຊີວິດ, ຝຶກອົບຮົມວິຊາຊີບ ແລະ ຄວາມຮູ້ດ້ານຕ່າງໆ ທີ່ເໝາະສົມ.

## ພາກທີ IV
## ສິດ, ໜ້າທີ່, ພັນທະ ແລະ ຜົນປະໂຫຍດ ຂອງຊາວໜຸ່ມລາວ
### ໝວດທີ 1
### ສິດ, ໜ້າທີ່ ແລະ ພັນທະ ຂອງຊາວໜຸ່ມລາວ

**ມາດຕາ 41 ສິດ ຂອງຊາວໜຸ່ມລາວ**

ຊາວໜຸ່ມລາວ ມີສິດ ດັ່ງນີ້:

1. ປ່ອນບັດເລືອກຕັ້ງ, ສະໝັກຮັບເລືອກຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ;
2. ດຳລົງຊີວິດ, ເລືອກອາຊີບ ແລະ ປະກອບທຸລະກິດ ທີ່ຖືກຕ້ອງຕາມກົດໝາຍ;
3. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ;

4. ໄດ້ຮັບການສຶກສາ, ຄົ້ນຄວ້າ, ຮ່ຳຮຽນ, ພັດທະນາຕົນເອງ, ຝຶກອົບຮົມ, ບຳລຸງ, ຍົກລະດັບວິຊາຊີບດ້ານຕ່າງໆ;

5. ໄດ້ຮັບຂໍ້ມູນ ຂ່າວສານ ທີ່ເປັນປະໂຫຍດ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 42 ໜ້າທີ່ ຂອງຊາວໜຸ່ມລາວ**

ຊາວໜຸ່ມລາວ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຮ່ຳຮຽນ, ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນກຳລັງແຮງໃນທຸກຂົງເຂດວຽກງານ ແລະ ກາຍເປັນຜູ້ສືບທອດທີ່ດີຂອງປະເທດຊາດ;

2. ເຄື່ອນໄຫວວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ປົກປັກຮັກສາອະນຸລັກ, ເສີມຂະຫຍາຍວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;

4. ປົກປັກຮັກສາສິ່ງແວດລ້ອມ ແລະ ສ້າງກິດຈະກຳອື່ນ ທີ່ເປັນປະໂຫຍດແກ່ສັງຄົມ ແລະ ບໍ່ຂັດກັບກົດໝາຍ;

5. ເຄື່ອນໄຫວກິລາ ກາຍຍະກຳ, ສິລະປະ ວັນນະຄະດີ ທີ່ບໍ່ຂັດກັບກົດໝາຍ;

6. ເປັນເຈົ້າການຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ;

7. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43 ພັນທະຂອງຊາວໜຸ່ມລາວ**

ຊາວໜຸ່ມລາວ ມີພັນທະ ດັ່ງນີ້:

1. ເຄົາລົບ, ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດ;

2. ສຶກສາຮ່ຳຮຽນ, ຝຶກຝົນຫຼໍ່ຫຼອມຕົນເອງ, ຮຽນວິຊາຊີບ, ສ້າງວຽກເຮັດງານທຳ ທີ່ຖືກຕ້ອງຕາມກົດໝາຍ;

3. ເຄົາລົບນັບຖື, ເບິ່ງແຍງ ລ້ຽງດູ, ໃຫ້ການຊ່ວຍເຫຼືອ ພໍ່ແມ່, ຜູ້ປົກຄອງ ແລະ ຄອບຄົວ;

4. ເຄົາລົບ ແລະ ຊ່ວຍເຫຼືອຜູ້ຊົງຄຸນວຸດທິ, ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ, ຜູ້ທຸກຍາກ, ຄົນພິການ, ຜູ້ອາຍຸສູງ ແລະ ຜູ້ດ້ອຍໂອກາດ;

5. ຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ເປັນຕົ້ນ ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເສດຖະກິດ-ສັງຄົມ ແລະ ການອອກແຮງງານ;

6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ຜົນປະໂຫຍດຂອງຊາວໜຸ່ມລາວ

### ມາດຕາ 44 ຜົນປະໂຫຍດທາງດ້ານຈິດໃຈ

ຜົນປະໂຫຍດທາງດ້ານຈິດໃຈ ມີ ດັ່ງນີ້:

1. ໄດ້ຮັບການສ້າງ, ບຳລຸງ, ຍົກລະດັບຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ, ວິຊາຊີບ ຕາມເງື່ອນໄຂຕົວຈິງ;

2. ໄດ້ຮັບນາມມະຍົດຕ່າງໆ ຕາມຜົນງານ ແລະ ການຄົ້ນຄວ້າປະດິດສ້າງສິ່ງໃໝ່ທີ່ມີຜົນປະໂຫຍດ ໃຫ້ແກ່ການປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ການຍ້ອງຍໍ ຕາມລະບຽບການ;

3. ໄດ້ຮັບການຄົ້ນຄວ້າ ສັບຊ້ອນເຂົ້າໃນຕຳແໜ່ງງານ ຂອງລັດ, ເອກະຊົນ ຕາມຄວາມຮູ້, ຄວາມສາມາດ ແລະ ເງື່ອນໄຂຕົວຈິງ;

4. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ໃນກໍລະນີທີ່ຖືກລະເມີດ.

ສຳລັບຊາວໜຸ່ມລາວ ຜູ້ທີ່ບໍ່ແມ່ນສະມາຊິກ ຂອງອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ນັ້ນ ຖ້າຫາກມີເງື່ອນໄຂ, ມາດຕະຖານ ແລະ ມີຄວາມຕື່ນຕົວສະໝັກໃຈ ຈະຖືກສະເໜີໃຫ້ອົງການຈັດຕັ້ງດັ່ງກ່າວ ພິຈາລະນາ ຮັບເຂົ້າເປັນສະມາຊິກຂອງຕົນ.

### ມາດຕາ 45 ຜົນປະໂຫຍດທາງດ້ານວັດຖຸ

ຜົນປະໂຫຍດທາງດ້ານວັດຖຸ ມີ ດັ່ງນີ້:

1. ໄດ້ຮັບຄ່າແຮງງານ, ເງິນເດືອນ ແລະ ນະໂຍບາຍ ຕາມກົດໝາຍ;
2. ໄດ້ຮັບເງິນອຸດໜູນ, ນະໂຍບາຍສະຫວັດດີການສັງຄົມ ແລະ ຜົນປະໂຫຍດອື່ນ ຕາມກົດໝາຍ.

## ພາກທີ V
## ການຈັດຕັ້ງຊາວໜຸ່ມລາວ

### ມາດຕາ 46 ການຈັດຕັ້ງຊາວໜຸ່ມລາວ

ການຈັດຕັ້ງຊາວໜຸ່ມລາວ ແມ່ນ ການຈັດຕັ້ງການເມືອງ ແລະ ສັງຄົມ ແບບຕື່ນຕົວສະໝັກໃຈຂອງ ຊາວໜຸ່ມ ເພື່ອສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມຊາວໜຸ່ມລາວບັນດາເຜົ່າ ເຂົ້າຮ່ວມ ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ; ເສີມຂະຫຍາຍສິດເປັນເຈົ້າຂອງປະເທດຊາດ, ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມລາວ.

ການຈັດຕັ້ງຂອງຊາວໜຸ່ມລາວ ມີ ດັ່ງນີ້:

1. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;
2. ສະຫະພັນຊາວໜຸ່ມລາວ.

**ມາດຕາ 47 ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແມ່ນ ໜຶ່ງໃນອົງການຈັດຕັ້ງມະຫາຊົນ ໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນ ທີ່ມີພັກປະຊາຊົນປະຕິວັດລາວເປັນແກນນຳ, ເປັນການຈັດຕັ້ງຂອງຊາວໜຸ່ມລາວ ຜູ້ຫ້າວຫັນ, ດີເດັ່ນ, ໄດ້ຜ່ານການຝຶກຝົນຫຼໍ່ຫຼອມ ຈາກຂະບວນການຂອງມະຫາຊົນ.

**ມາດຕາ 48 ສະຫະພັນຊາວໜຸ່ມລາວ**

ສະຫະພັນຊາວໜຸ່ມລາວ ແມ່ນ ການຈັດຕັ້ງສັງຄົມຂອງຊາວໜຸ່ມລາວ ໂດຍແມ່ນຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນແກນນຳ, ຈັດຕັ້ງ ແລະ ເຄື່ອນໄຫວຕາມລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ ຊຶ່ງມີ ສະມາຄົມ, ສະໂມສອນ, ກອງອາສາສະໝັກຊາວໜຸ່ມ, ກຸ່ມຄົນ ຂອງຊາວໜຸ່ມລາວບັນດາເຜົ່າ ເປັນການຈັດຕັ້ງຂອງຊາວໜຸ່ມທີ່ມີຄວາມຄົບຖ້ວນເຂົ້າເປັນສະມາຊິກ ໂດຍບໍ່ຈຳແນກຊົນຄົນ, ສາສະໜາ, ຄວາມເຊື່ອຖື, ເພດ, ສາຂາອາຊີບ.

ລະບົບການຈັດຕັ້ງຂອງສະຫະພັນຊາວໜຸ່ມລາວ ມີ ສາມຂັ້ນ ຄື:

1. ສະຫະພັນຊາວໜຸ່ມລາວຂັ້ນສູນກາງ ຊຶ່ງໄດ້ຮັບການອະນຸຍາດສ້າງຕັ້ງຈາກຄະນະເລຂາທິການສູນກາງພັກ ໂດຍມອບໃຫ້ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ຄຸ້ມຄອງ, ນຳພາການຈັດຕັ້ງ ແລະ ເຄື່ອນໄຫວຕາມກົດລະບຽບຂອງ ສະຫະພັນຊາວໜຸ່ມລາວ;

2. ສະຫະພັນຊາວໜຸ່ມລາວ ແຂວງ, ນະຄອນຫຼວງ ຊຶ່ງໄດ້ຮັບການອະນຸຍາດສ້າງຕັ້ງຈາກຄະນະປະຈຳພັກ ແຂວງ, ນະຄອນຫຼວງ ໂດຍມອບໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນຫຼວງ ເປັນຜູ້ນຳພາດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຕາມກົດລະບຽບຂອງ ສະຫະພັນຊາວໜຸ່ມລາວ;

3. ສະຫະພັນຊາວໜຸ່ມລາວ ເມືອງ, ເທດສະບານ, ນະຄອນ ຊຶ່ງໄດ້ຮັບການອະນຸຍາດສ້າງຕັ້ງຈາກຄະນະປະຈຳພັກເມືອງ, ເທດສະບານ, ນະຄອນ ໂດຍມອບໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເມືອງ, ເທດສະບານ, ນະຄອນ ເປັນຜູ້ນຳພາດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຕາມກົດລະບຽບຂອງສະຫະພັນຊາວໜຸ່ມລາວ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຫະພັນຊາວໜຸ່ມລາວແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 49 ຂໍ້ຫ້າມສຳລັບຊາວໜຸ່ມລາວ**

ຫ້າມຊາວໜຸ່ມລາວ ມີພຶດຕິກຳ ດັ່ງນີ້:

1. ມົ່ວສຸມ, ເສບສິ່ງ, ຜະລິດ, ປຸງແຕ່ງ, ຊື້ ຂາຍ, ຄອບຄອງ, ເຊື່ອງອຳ, ປົກປັງ ສິ່ງເສບຕິດ, ສິ່ງມຶນເມົາທີ່ຜິດກົດໝາຍ;

2. ຊື້ ຂາຍປະເວນີ, ເຜີຍແຜ່ສິ່ງລາມົກ, ອະນາຈານ, ຫຼິ້ນການພະນັນ; ຜະລິດ, ຈຳໜ່າຍ, ເຜີຍແຜ່, ຊົມໃຊ້ຜະລິດຕະພັນວັດທະນະທຳ ຫຼື ມີພຶດຕິກຳທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ; ແຕ່ງດອງກ່ອນໄວອາຍຸ, ນຳໃຊ້ສື່ສັງຄົມອອນລາຍ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

3. ຜະລິດ, ຊື້ ຂາຍ, ຄອບຄອງ ແລະ ຖືອາວຸດ ທຸກຊະນິດ, ວັດຖຸລະເບີດ, ສານພິດທຸກຊະນິດ ເພື່ອຈຸດປະສົງໃດໜຶ່ງທີ່ຜິດກົດໝາຍ;

4. ແບ່ງແຍກຄວາມສາມັກຄີບັນດາເຜົ່າ, ສາສະໜາ, ກໍ່ການປັ່ນປ່ວນ, ໃສ່ຮ້າຍປ້າຍສີ, ຈັດຕັ້ງເປັນກຸ່ມກ້ອນ, ໂຮມຊຸມນຸມ ແລະ ເດີນຂະບວນ ທີ່ຂັດກັບກົດໝາຍ, ສ້າງຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 50 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຊາວໜຸ່ມ ເພື່ອຫາຜົນປະໂຫຍດໃຫ້ຕົນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

2. ຂັດຂວາງ, ນາບຂູ່, ບໍ່ສ້າງເງື່ອນໄຂ, ບໍ່ອຳນວຍຄວາມສະດວກ ໃຫ້ແກ່ຊາວໜຸ່ມໃນການເຄື່ອນໄຫວທີ່ເປັນປະໂຫຍດຕໍ່ສັງຄົມ;

3. ໂຄສະນາ ຊວນເຊື່ອກ່ຽວກັບສິ່ງເສບຕິດ, ສິ່ງມຶນເມົາ, ສິ່ງລາມົກ, ໃຫ້ຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງ, ສ້າງສິ່ງຈູງໃຈ, ຊັກຊວນ, ຊື້ຈ້າງຈອບອອຍ ແລະ ເບື່ອເມົາຊາວໜຸ່ມ;

4. ປົກປ້ອງ, ເມີນເສີຍ, ຊຸກຍູ້, ສົ່ງເສີມ ຊາວໜຸ່ມທີ່ມີການກະທຳ ຫຼື ຈະກະທຳສິ່ງໃດໜຶ່ງ ທີ່ບໍ່ຖືກຕ້ອງ;

5. ບໍ່ໃຫ້ກຽດ, ບໍ່ໃຫ້ຄວາມສະເໝີພາບ, ຂູດຮີດແຮງງານ, ຂູດຮີດທາງເພດ ຫຼື ໃຊ້ຄວາມຮຸນແຮງຕໍ່ຊາວໜຸ່ມ ໃນທຸກຮູບແບບ;

6. ນຳໃຊ້ບັນດາ ພື້ນຖານໂຄງລ່າງເຄື່ອນໄຫວວັດທະນະທຳ, ກິລາ, ສິລະປະ ຂອງຊາວໜຸ່ມ ເຂົ້າໃນຈຸດປະສົງອື່ນ ທີ່ສົ່ງຜົນສະທ້ອນເຖິງການຈັດຕັ້ງ ແລະ ການເຄື່ອນໄຫວຂອງຊາວໜຸ່ມ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຄຸ້ມຄອງ ແລະ ກວດກາຊາວໜຸ່ມລາວ
### ໝວດທີ 1
### ການຄຸ້ມຄອງຊາວໜຸ່ມລາວ

**ມາດຕາ 51 ອົງການຄຸ້ມຄອງຊາວໜຸ່ມລາວ**

ລັດຖະບານ ເປັນຜູ້ຄຸ້ມຄອງຊາວໜຸ່ມລາວ ຢ່າງລວມສູນ ແລະ ເປັນເອກະພາບ ທົ່ວປະເທດໂດຍມອບໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງຊາວໜຸ່ມລາວ ປະກອບດ້ວຍ:

1. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

2. ສະຫະພັນຊາວໜຸ່ມລາວ;

3. ການຈັດຕັ້ງຂອງລັດ;

4. ການຈັດຕັ້ງຂອງພາກສ່ວນອື່ນ.

**ມາດຕາ 52 ສິດ ແລະ ໜ້າທີ່ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ໃນການຄຸ້ມຄອງຊາວໜຸ່ມລາວ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານຊາວໜຸ່ມ;

2. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບຊາວໜຸ່ມ ເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການກ່ຽວຂ້ອງ ໃຫ້ທົ່ວສັງຄົມ;

4. ເສີມໂຮມຄວາມສາມັກຄີ, ສຶກສາອົບຮົມຊາວໜຸ່ມລາວບັນດາເຜົ່າ ໃຫ້ມີຄຸນສົມບັດ ສືບທອດປະຕິວັດ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າ ລວມທັງສະໜອງຂໍ້ມູນ ຂ່າວສານ ທີ່ຈຳເປັນໃຫ້ຊາວໜຸ່ມ;

5. ສ້າງຂະບວນການຂອງຊາວໜຸ່ມ ເພື່ອຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

6. ສ້າງຕັ້ງການຈັດຕັ້ງຊາວໜຸ່ມ ຢູ່ໃນທຸກຂົງເຂດວຽກງານທີ່ມີຊາວໜຸ່ມສັງກັດຢູ່ ແລະ ປັບປຸງການຈັດຕັ້ງຊາວໜຸ່ມ ໃນບ່ອນທີ່ມີແລ້ວ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ;

7. ສົ່ງເສີມ ຫົວຄິດປະດິດສ້າງ, ຄົ້ນຄວ້າການປະດິດສ້າງສິ່ງໃໝ່ ຂອງຊາວໜຸ່ມລາວບັນດາເຜົ່າ ເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ;

8. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ລວມທັງໂຮງຮຽນ, ສະຖາບັນຕ່າງໆ ເພື່ອຄຸ້ມຄອງ ແລະ ພັດທະນາວຽກງານຊາວໜຸ່ມ;

9. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ, ເຍົາວະຊົນ ແລະ ອະນຸຊົນ;

10. ປະກອບຄຳເຫັນ ຕໍ່ແນວທາງ, ແຜນນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເປັນຕົ້ນ ບັນຫາທີ່ກ່ຽວພັນກັບວຽກງານຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

11. ຄຸ້ມຄອງສະຫະພັນຊາວໜຸ່ມແຫ່ງຊາດລາວ;

12. ພົວພັນຮ່ວມມື ກັບຕ່າງປະເທດ ຕາມການມອບໝາຍ ຫຼື ຕາມການອະນຸຍາດ;

13. ຕິດຕາມກວດກາການເຄື່ອນໄຫວຂອງສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ;

14. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານຂອງຕົນໃຫ້ຂັ້ນເທິງ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 ສິດ ແລະ ໜ້າທີ່ຂອງສະຫະພັນຊາວໜຸ່ມລາວ**

ໃນການຄຸ້ມຄອງຊາວໜຸ່ມລາວ ສະຫະພັນຊາວໜຸ່ມລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍ, ລະບຽບການຂອງລັດ ມາເປັນ ແຜນງານ, ໂຄງການ ແລະ ກິດຈະກຳ ເຄື່ອນໄຫວໃນແຕ່ລະໄລຍະ;

2. ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມສະມາຊິກໃຫ້ມີ ຄຸນສົມບັດ, ຈະລິຍະທຳ, ນ້ຳໃຈຮັກຊາດ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຕ້ານ ແລະ ສະກັດກັ້ນບັນດາປາກົດການຫຍໍ້ທໍ້ໃນຖັນແຖວຊາວໜຸ່ມ;

3. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ທີ່ກ່ຽວຂ້ອງກັບສະຫະພັນຊາວໜຸ່ມລາວ;

4. ປັບປຸງການຈັດຕັ້ງໃຫ້ໜັກແໜ້ນ, ເຂັ້ມແຂງ ແລະ ເຄື່ອນໄຫວໃຫ້ມີປະສິດທິຜົນ;

5. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາການຈັດຕັ້ງສັງຄົມຂອງຊາວໜຸ່ມ ແລະ ບຸກຄົນທີ່ເຮັດວຽກຢູ່ບັນດາອົງການຈັດຕັ້ງສັງຄົມຂອງຊາວໜຸ່ມລາວ;

6. ປະກອບຄຳເຫັນຕໍ່ແຜນພັດທະນາຊາວໜຸ່ມ, ເປົ້າລະຊິບ ແລະ ແຜນການເຄື່ອນໄຫວອື່ນ ທີ່ພົວພັນກັບວຽກງານຊາວໜຸ່ມ ໃນແຕ່ລະໄລຍະ;

7. ສະເໜີສະມາຊິກຂອງຕົນອອກສະໝັກຮັບເລືອກຕັ້ງເຂົ້າໃນອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງສັງຄົມ;

8. ສ້າງເງື່ອນໄຂໃຫ້ຊາວໜຸ່ມໄດ້ ຮັບການຝຶກອົບຮົມ, ສົ່ງເສີມວິຊາຊີບ ແລະ ສາມາດປະກອບອາຊີບໄດ້;

9. ປຸກລະດົມ, ຊຸກຍູ້ ເສີມຂະຫຍາຍກຳລັງແຮງ ຫົວຄິດປະດິດສ້າງ, ສະຕິປັນຍາຂອງສະມາຊິກ ແລະ ການຈັດຕັ້ງທີ່ເຮັດວຽກກ່ຽວກັບຊາວໜຸ່ມ ໃຫ້ມີນ້ຳໃຈເສຍສະຫຼະ ເວລາ, ເຫື່ອແຮງ, ສະຕິປັນຍາ ແລະ ວັດຖຸປັດໄຈ ປະກອບສ່ວນໃຫ້ສັງຄົມ ແລະ ປະເທດຊາດ;

10. ສ້າງກົນໄກໃນການປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ, ສົ່ງເສີມ ແລະ ພັດທະນາຊາວໜຸ່ມລາວບັນດາເຜົ່າ;

11. ເປັນເຈົ້າການປະສານສົມທົບກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ, ຍາດແຍ່ງການສະໜັບສະໜູນ ແລະ ການຊ່ວຍເຫຼືອ ຕາມການມອບໝາຍ;

12. ຄຸ້ມຄອງ, ນຳໃຊ້ງົບປະມານ, ທຶນຊ່ວຍເຫຼືອ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ສາມາດກວດສອບໄດ້;

13. ສ້າງຕັ້ງກອງທຶນເພື່ອນຳໃຊ້ເຂົ້າໃນວຽກງານສະຫະພັນຊາວໜຸ່ມລາວ;

14. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບຊາວໜຸ່ມ ໃຫ້ຂັ້ນເທິງ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 ສິດ ແລະ ໜ້າທີ່ຂອງການຈັດຕັ້ງຂອງລັດ**

ໃນການຄຸ້ມຄອງຊາວໜຸ່ມລາວ ການຈັດຕັ້ງຂອງລັດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບຊາວໜຸ່ມ ເປັນແຜນການ, ແຜນງານ, ໂຄງການຂອງຕົນ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແນວທາງ ນະໂຍບາຍ, ກົດໝາຍ ກ່ຽວກັບຊາວໜຸ່ມ;

3. ສ້າງ, ບຳລຸງພະນັກງານ ຊາວໜຸ່ມຂອງຕົນ;

4. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແນວທາງ ນະໂຍບາຍ, ກົດໝາຍ ກ່ຽວກັບຊາວໜຸ່ມ;

5. ສ້າງເງື່ອນໄຂໃຫ້ການຈັດຕັ້ງຊາວໜຸ່ມ ມີລາຍຮັບເຂົ້າໃນການເຄື່ອນໄຫວກິດຈະກຳຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

6. ເກັບກຳສະຖິຕິ ແລະ ຂໍ້ມູນ ກ່ຽວກັບຊາວໜຸ່ມ;

7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ໃຫ້ການຈັດຕັ້ງຊາວໜຸ່ມໄດ້ເຄື່ອນໄຫວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 ສິດ ແລະ ໜ້າທີ່ຂອງພາກສ່ວນອື່ນ**

ພາກສ່ວນອື່ນ ເປັນຕົ້ນ ສະຖາບັນການສຶກສາ, ໂຮງຈັກ,ໂຮງງານ, ບຸກຄົນ, ນິຕິບຸກຄົນ ແລະ ຄອບຄົວ ມີສິດ ແລະ ໜ້າທີ່ ປະສານສົມທົບ, ຮ່ວມມື ກັບ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສະຫະພັນຊາວໜຸ່ມລາວ ໃນການຄຸ້ມຄອງ, ປົກປ້ອງ, ສົ່ງເສີມ, ພັດທະນາຊາວໜຸ່ມລາວ ແລະ ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ຕາມພັນທະ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາຊາວໜຸ່ມລາວ

**ມາດຕາ 56 ອົງການກວດກາຊາວໜຸ່ມລາວ**

ອົງການກວດກາຊາວໜຸ່ມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງຊາວໜຸ່ມລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ ແລະ ອົງການກວດສອບແຫ່ງລັດ.

**ມາດຕາ 57 ເນື້ອໃນການກວດກາ**

ການກວດກາ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການນຳໃຊ້ສິດ, ປະຕິບັດໜ້າທີ່, ຄວາມຮັບຜິດຊອບ, ແບບແຜນວິທີເຮັດວຽກ ຂອງອົງການຄຸ້ມຄອງຊາວໜຸ່ມລາວ ໃນການປົກປ້ອງ, ສົ່ງເສີມ ແລະ ພັດທະນາ ຊາວໜຸ່ມລາວ;
2. ການເຄື່ອນໄຫວ, ການກະທຳ, ການດຳລົງຊີວິດ, ການພົວພັນສັງຄົມ ຂອງຊາວໜຸ່ມລາວ;
3. ການເຄື່ອນໄຫວຂອງການຈັດຕັ້ງຊາວໜຸ່ມລາວ.

**ມາດຕາ 58 ຮູບການ ການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຢ່າງເປັນປົກກະຕິ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາຕາມ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຂອງຄະນະກວດກາຊາວໜຸ່ມ ແລະ ຄຳສະເໜີຂອງອົງການກວດກາພາຍນອກ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາວຽກງານຂອງຊາວໜຸ່ມລາວ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 59 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 60 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະໄດ້ຮັບການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 61 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສະຫະພັນຊາວໜຸ່ມລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 62 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 234 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 22 ທັນວາ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍຊາວໜຸ່ມລາວ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 18 /ສພຊ, ລົງວັນທີ 10 ພະຈິກ 2020 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊາວໜຸ່ມລາວ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 25/ຄປຈ, ລົງວັນທີ 08 ທັນວາ 2020.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ ກົດໝາຍວ່າດ້ວຍຊາວໜຸ່ມລາວ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 18 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 10 / 11 / 20

# ມະຕິ
## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍຊາວໜຸ່ມລາວ

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍຊາວໜຸ່ມລາວ ໃນວາລະກອງປະຊຸມ ຕອນເຊົ້າວັນທີ 10 ພະຈິກ 2020.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍຊາວໜຸ່ມລາວ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 86 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 10 ພະຈິກ 2020

# ກົດໝາຍ
# ວ່າດ້ວຍຊາວໜຸ່ມລາວ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ, ການຕິດຕາມ ກວດກາ, ການປົກປ້ອງ, ການສົ່ງເສີມ ແລະ ພັດທະນາ ຊາວໜຸ່ມລາວບັນດາເຜົ່າ ເພື່ອເຕົ້າໂຮມ ຊາວໜຸ່ມລາວເຂົ້າການຈັດຕັ້ງ, ສຶກສາອົບຮົມ ໃຫ້ມີຄຸນສົມບັດ, ມີຈາລິຍະທໍາ, ມີຄ່ານິຍົມທີ່ຖືກຕ້ອງ ແລະ ມີລະບຽບວິໄນ ກາຍເປັນກໍາລັງແຮງ, ເປັນຜູ້ສືບທອດພາລະກິດຂອງຊາດ, ແນໃສ່ສ້າງຄວາມສາມັກຄີ, ຍົກສູງນໍ້າໃຈຮັກຊາດ, ມີຄວາມຕື່ນຕົວຫ້າວຫັນຂອງຊາວໜຸ່ມ, ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2 ຊາວໜຸ່ມລາວ

ຊາວໜຸ່ມລາວ ແມ່ນ ພົນລະເມືອງລາວທີ່ມີອາຍຸແຕ່ ສິບຫ້າປີ ຫາ ສາມສິບຫ້າປີ ໂດຍບໍ່ຈໍາແນກເພດ, ເຜົ່າ, ສາສະໜາ, ການເຊື່ອຖື, ອາຊີບ, ຖານະທາງສັງຄົມ.

### ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສະມາຄົມ** ໝາຍເຖິງ ການຈັດຕັ້ງສັງຄົມ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ ດ້ວຍຄວາມສະໝັກໃຈ, ເຄື່ອນໄຫວເປັນປະຈໍາ, ບໍ່ຫວັງຜົນກໍາໄລ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງ ສະມາຊິກສະມາຄົມ ຫຼື ຊຸມຊົນ;
2. **ສະໂມສອນ** ໝາຍເຖິງ ການຈັດຕັ້ງສັງຄົມ ທີ່ໄດ້ຮັບການສ້າງຕັ້ງຂຶ້ນຢ່າງຖືກຕ້ອງຕາມກົດໝາຍ ດ້ວຍຄວາມສະໝັກໃຈ, ເຄື່ອນໄຫວເປັນປະຈໍາ, ບໍ່ຫວັງຜົນກໍາໄລ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງສະມາຊິກຄົນ;

3. **ກອງອາສາສະໝັກຊາວໜຸ່ມ** ໝາຍເຖິງ ການຈັດຕັ້ງຂອງຊາວໜຸ່ມ ຊຶ່ງປະກອບດ້ວຍ ສະມາຊິກຊາວໜຸ່ມປະຊາຊົນປະຕິວັດລາວ ແລະ/ຫຼື ຊາວໜຸ່ມ, ບຸກຄົນ ທີ່ມີຄວາມຕື່ນຕົວສະໝັກໃຈເຂົ້າຊ່ວຍວຽກສັງຄົມ;

4. **ກຸ່ມຄົນ** ໝາຍເຖິງ ຈຳນວນສອງຄົນ ຫຼື ຫຼາຍກວ່ານັ້ນຂຶ້ນໄປ ທີ່ເຕົ້າໂຮມກັນດ້ວຍຄວາມສະໝັກໃຈ ທີ່ມີຈຸດປະສົງດຽວກັນ;

5. **ຄ້າຍດັດສ້າງ** ໝາຍເຖິງ ສະຖານທີ່ປະຕິບັດໂທດຂອງນັກໂທດການສຳຄັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ;

6. **ສູນດັດສ້າງ** ໝາຍເຖິງ ສະຖານທີ່ສຶກສາອົບຮົມ, ດັດສ້າງທາງດ້ານບໍລິຫານ ຕໍ່ຜູ້ກະທຳຜິດທາງອາຍາ ໃນສະຖານເບົາ;

7. **ຄວາມສ່ຽງ** ໝາຍເຖິງ ເຫດ ແລະ ເງື່ອນໄຂ ທີ່ບໍ່ເພິ່ງປາຖະໜາ, ມີຄວາມບໍ່ແນ່ນອນ ແລະ ສາມາດເກີດຂຶ້ນໄດ້ຕະຫຼອດເວລາ;

8. **ສິ່ງເສບຕິດ** ໝາຍເຖິງ ສິ່ງກະຕຸ້ນຕໍ່ລະບົບປະສາດ ຫຼື ອາລົມຈິດ ຈາກ ສິ່ງວັດຖຸ, ພຶດຕິກຳຂອງຄົນ ຫຼື ສື່ສັງຄົມອອນລາຍທີ່ບໍ່ຖືກຕ້ອງ ໂດຍມີຜົນກະທົບທາງລົບຢ່າງຮ້າຍແຮງ ຕໍ່ຮ່າງກາຍ ແລະ ຈິດປະສາດ;

9. **ການຈຳແນກ** ໝາຍເຖິງ ການບໍ່ຍອມຮັບ ຄວາມແຕກຕ່າງ, ຄວາມເທົ່າທຽມ ແລະ ຄວາມສະເໝີພາບ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບຊາວໜຸ່ມລາວ**

ລັດ ວາງນະໂຍບາຍ ແລະ ກົນໄກ ກ່ຽວກັບການຄຸ້ມຄອງ, ການພັດທະນາ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມລາວ.

ລັດ ສ້າງໂຄງລ່າງພື້ນຖານ, ສະໜອງ ງົບປະມານ, ວັດຖຸປະກອນ, ເຕັກນິກ ທີ່ຈຳເປັນ ໃຫ້ຊາວໜຸ່ມລາວໄດ້ຍົກລະດັບ ຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ ແລະ ໄດ້ເຄື່ອນໄຫວກິດຈະກຳທີ່ຖືກຕ້ອງຕາມກົດໝາຍ.

ລັດ ຊຸກຍູ້, ສົ່ງເສີມ ຊາວໜຸ່ມລາວ ໃຫ້ໄດ້ຮັບການສຶກສາ, ຝຶກອົບຮົມ, ມີວຽກເຮັດງານທຳ, ໄດ້ຮັບຂໍ້ມູນ ຂ່າວສານ, ເຂົ້າເຖິງການບໍລິການ ທີ່ຖືກຕ້ອງຕາມກົດໝາຍ.

ລັດ ຊຸກຍູ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ເຂົ້າຮ່ວມ ແລະ ປະກອບສ່ວນເຂົ້າໃນການປົກປ້ອງ, ສົ່ງເສີມ ແລະ ພັດທະນາຊາວໜຸ່ມລາວ.

**ມາດຕາ 5 ຫຼັກການກ່ຽວກັບການເຄື່ອນໄຫວຂອງຊາວໜຸ່ມລາວ**

ຊາວໜຸ່ມລາວ ໃຫ້ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;
2. ສອດຄ່ອງກັບແຜນຍຸດທະສາດການພັດທະນາຊາວໜຸ່ມໃນແຕ່ລະໄລຍະ;
3. ຮັບປະກັນສິດສະເໝີພາບ ທາງດ້ານການເມືອງ, ເສດຖະກິດ ແລະ ວັດທະນະທຳ-ສັງຄົມ;
4. ສອດຄ່ອງກັບໄລຍະຂະຫຍາຍຕົວ ທາງດ້ານຮ່າງກາຍ ແລະ ຈິດໃຈຂອງຊາວໜຸ່ມ;
5. ປະສານສົມທົບກັບຂະແໜງການອື່ນ;
6. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາກລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບຊາວໜຸ່ມລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຊາວໜຸ່ມ ບົນພື້ນຖານແນວທາງ ນະໂຍບາຍການຕ່າງປະເທດ ຂອງ ສປປ ລາວ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ກິລາ, ສິລະປະ, ວັດທະນະທຳ, ການຄົ້ນຄວ້າວິທະຍາສາດ-ເຕັກນິກ, ເຕັກໂນໂລຊີ, ການຊ່ວຍເຫຼືອ, ການຝຶກອົບຮົມ ແລະ ການຍົກລະດັບຄວາມຮູ້ວິຊາການ, ປະຕິບັດຕາມສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ຊາວໜຸ່ມລາວ

**ມາດຕາ 8 ຄວາມສຳຄັນຂອງຊາວໜຸ່ມລາວ**

ຊາວໜຸ່ມລາວ ເປັນກຳລັງແຮງອັນໃຫຍ່ຫຼວງ, ເປັນຜູ້ສືບທອດພາລະກິດຂອງຊາດ, ເປັນກຳລັງປະຈົນບານເຂົ້າໃນທຸກຂົງເຂດວຽກງານຂອງຂະແໜງການ ແລະ ທ້ອງຖິ່ນ, ເປັນຜູ້ທີ່ມີຫົວຄິດປະດິດສ້າງ ແລະ ນຳໃຊ້ເຕັກໂນໂລຊີເຂົ້າໃນການພັດທະນາປະເທດຊາດ ຕາມເງື່ອນໄຂ ແລະ ຄວາມສາມາດຕົວຈິງຂອງຊາວໜຸ່ມແຕ່ລະປະເພດ.

**ມາດຕາ 9 ປະເພດຊາວໜຸ່ມລາວ**

ການຈັດແບ່ງປະເພດຊາວໜຸ່ມລາວ ແມ່ນ ເພື່ອຄຸ້ມຄອງ, ປົກປ້ອງ, ສົ່ງເສີມ ແລະ ພັດທະນາໃຫ້ເໝາະສົມກັບແຕ່ລະປະເພດ.

ຊາວໜຸ່ມລາວ ໄດ້ຈັດເປັນປະເພດ ດັ່ງນີ້:

1. ຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ;
2. ຊາວໜຸ່ມ ນັກຮຽນ, ນັກສຶກສາ;
3. ຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ;
4. ຊາວໜຸ່ມ ລັດຖະກອນ;
5. ຊາວໜຸ່ມ ໃນກຳລັງປະກອບອາວຸດ;
6. ຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ;
7. ຊາວໜຸ່ມ ໃນຂົງເຂດທຸລະກິດ;
8. ຊາວໜຸ່ມ ດ້ອຍໂອກາດ;
9. ຊາວໜຸ່ມ ພິການ;
10. ຊາວໜຸ່ມ ວ່າງງານ;

11. ຊາວໜຸ່ມ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ;

12. ຊາວໜຸ່ມ ທີ່ຕິດສິ່ງເສບຕິດ;

13. ຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກກັດສ້າງ.

ໃນກໍລະນີຈໍາເປັນໂດຍອີງໃສ່ສະພາບຄວາມເປັນຈິງໃນແຕ່ລະໄລຍະ ອາດຈະກໍານົດຊາວໜຸ່ມລາວປະເພດອື່ນອີກກໍໄດ້.

**ມາດຕາ 10 ຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ**

ຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ ແມ່ນ ຜູ້ມີອາຍຸ ສິບຫ້າປີ ຂຶ້ນໄປ ແຕ່ບໍ່ທັນເຖິງ ສິບແປດປີ.

**ມາດຕາ 11 ຊາວໜຸ່ມ ນັກຮຽນ, ນັກສຶກສາ**

ຊາວໜຸ່ມ ນັກຮຽນ, ນັກສຶກສາ ແມ່ນ ຜູ້ກໍາລັງຮຽນ, ສຶກສາຄົ້ນຄວ້າ ຢູ່ສະຖາບັນການສຶກສາໃນລະດັບຕ່າງໆ, ຝຶກງານ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 12 ຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ**

ຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ ແມ່ນ ຜູ້ມີຄວາມຮູ້, ຄວາມສາມາດພິເສດໃນການສຶກສາ, ຄົ້ນຄວ້າ, ການປະດິດສ້າງ ແລະ ການປະຕິບັດຕົວຈິງ.

**ມາດຕາ 13 ຊາວໜຸ່ມ ລັດຖະກອນ**

ຊາວໜຸ່ມ ລັດຖະກອນ ແມ່ນ ຜູ້ໄດ້ຮັບບັນຈຸໃຫ້ເຮັດວຽກ, ເລືອກຕັ້ງ ຫຼື ແຕ່ງຕັ້ງ ໃຫ້ດໍາລົງຕໍາແໜ່ງໃດໜຶ່ງ ໃນອົງການຈັດຕັ້ງພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ ຫຼື ໄປປະຈໍາການຢູ່ສໍານັກງານຜູ້ຕາງໜ້າ ສປປ ລາວ ຢູ່ຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຊຶ່ງໄດ້ຮັບເງິນເດືອນ ແລະ ເງິນອຸດໜູນຈາກງົບປະມານແຫ່ງລັດ.

**ມາດຕາ 14 ຊາວໜຸ່ມ ໃນກໍາລັງປະກອບອາວຸດ**

ຊາວໜຸ່ມ ໃນກໍາລັງປະກອບອາວຸດ ແມ່ນ ຜູ້ສັງກັດໃນການຈັດຕັ້ງ, ການເຄື່ອນໄຫວ, ຊີ້ນໍາບັນຊາ, ຄຸ້ມຄອງ, ກວດກາ ຂອງກໍາລັງປະກອບອາວຸດປະຊາຊົນ.

**ມາດຕາ 15 ຊາວໜຸ່ມ ກໍາມະກອນ, ກະສິກອນ ແລະ ຊ່າງຫັດຖະກໍາ**

ຊາວໜຸ່ມ ກໍາມະກອນ ແມ່ນ ຜູ້ເຮັດວຽກໃນໂຮງຈັກ, ໂຮງງານ, ຫົວໜ່ວຍທຸລະກິດ, ຜູ້ຮັບເໝົາກໍ່ສ້າງ ແລະ ໄດ້ຮັບຄ່າຕອບແທນ ຕາມສັນຍາແຮງງານ ແລະ ກົດໝາຍ.

ຊາວໜຸ່ມ ກະສິກອນ ແມ່ນ ຜູ້ເຮັດວຽກກ່ຽວກັບກະສິກໍາ ເປັນຕົ້ນ ການປູກຝັງ, ລ້ຽງສັດ, ການປະມົງ.

ຊາວໜຸ່ມ ຊ່າງຫັດຖະກໍາ ແມ່ນ ຜູ້ທີ່ເຮັດວຽກກ່ຽວກັບຫັດຖະກໍາ ເປັນຕົ້ນ ຈັກສານ, ຄວັດ, ແກະສະຫຼັກ, ປັ້ນ, ຫຼໍ່, ທໍຜ້າ, ປັກ, ຖັກ ແສ່ວ, ຕໍ່າຫູກ, ຕີເຫຼັກ, ຕີເງິນ, ຕີຄໍາ.

**ມາດຕາ 16 ຊາວໜຸ່ມ ໃນຂົງເຂດທຸລະກິດ**

ຊາວໜຸ່ມ ໃນຂົງເຂດທຸລະກິດ ແມ່ນ ຜູ້ເປັນເຈົ້າຂອງກິດຈະການ, ວິສາຫະກິດ ແລະ ຜູ້ເຮັດວຽກ ຢູ່ຫົວໜ່ວຍທຸລະກິດ ເປັນຕົ້ນ ການຜະລິດ, ການຄ້າ, ການບໍລິການ, ການທ່ອງທ່ຽວ, ທຸລະກຳການເງິນ, ຮ້ານສ້ອມແປງ, ຮ້ານເສີມຄວາມງາມ, ຮ້ານຂາຍຢາ ແລະ ບວດແຜນບູຮານ.

**ມາດຕາ 17 ຊາວໜຸ່ມ ດ້ອຍໂອກາດ**

ຊາວໜຸ່ມ ດ້ອຍໂອກາດ ແມ່ນ ຜູ້ຂາດເຂີນ ແລະ ມີຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ, ສັງຄົມ, ການສຶກສາ, ສາທາລະນະສຸກ.

**ມາດຕາ 18 ຊາວໜຸ່ມ ພິການ**

ຊາວໜຸ່ມ ພິການ ແມ່ນ ຜູ້ມີຄວາມບົກພ່ອງທາງດ້ານຮ່າງກາຍ, ການເບິ່ງເຫັນ, ການໄດ້ຍິນ ແລະ ການປາກເວົ້າ, ສະຕິປັນຍາ, ຄວາມຈື່ຈໍາ ແລະ ດ້ານອື່ນ ບວກກັບສິ່ງກີດຂວາງ ຊຶ່ງເປັນອຸປະສັກໃນການເຄື່ອນໄຫວຊີວິດປະຈໍາວັນ, ການຮຽນຮູ້ ແລະ ການເຂົ້າຮ່ວມກິດຈະກໍາທາງສັງຄົມ ໄດ້ຢ່າງເຕັມສ່ວນ.

**ມາດຕາ 19 ຊາວໜຸ່ມ ວ່າງງານ**

ຊາວໜຸ່ມ ວ່າງງານ ແມ່ນ ຜູ້ທີ່ບໍ່ມີວຽກເຮັດງານທໍາ.

**ມາດຕາ 20 ຊາວໜຸ່ມ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ**

ຊາວໜຸ່ມ ທີ່ມີຄວາມສ່ຽງ ແມ່ນ ຜູ້ດໍາລົງຊີວິດ, ເຮັດວຽກ, ສຶກສາ, ຄົ້ນຄວ້າ, ທົດລອງ ຢູ່ໃນສະພາບແວດລ້ອມ ແລະ ອາຊີບທີ່ມີຄວາມສ່ຽງ, ຄວາມອັນຕະລາຍ ຕໍ່ຊີວິດ ແລະ ສຸຂະພາບ.

ຊາວໜຸ່ມ ຖືກເຄາະຮ້າຍ ແມ່ນ ຜູ້ໄດ້ຮັບຜົນກະທົບຈາກ ທໍາມະຊາດ ແລະ ມະນຸດສ້າງຂຶ້ນ ເປັນຕົ້ນໄພພິບັດທາງທໍາມະຊາດ, ພະຍາດລະບາດ, ການໃຊ້ຄວາມຮຸນແຮງ, ການຄ້າມະນຸດ, ສິ່ງເສດເຫຼືອສົງຄາມ, ສິ່ງເສບຕິດ, ການປະກອບອາຊີບ, ອຸບປະຕິເຫດ.

**ມາດຕາ 21 ຊາວໜຸ່ມ ທີ່ຕິດສິ່ງເສບຕິດ**

ຊາວໜຸ່ມ ທີ່ຕິດສິ່ງເສບຕິດ ແມ່ນ ຜູ້ເສບ ຫຼື ຊົມໃຊ້ສິ່ງເສບຕິດຢ່າງຕໍ່ເນື່ອງ ແລະ ຂາດບໍ່ໄດ້ ເປັນຕົ້ນຢາເສບຕິດ, ທາດເຫຼົ້າ, ສິ່ງມຶນເມົາ, ການພະນັນ, ສື່ສັງຄົມອອນລາຍທີ່ບໍ່ຖືກຕ້ອງ ແລະ ບໍ່ເໝາະສົມ.

**ມາດຕາ 22 ຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ**

ຊາວໜຸ່ມ ທີ່ຖືກຄຸມຂັງ ແມ່ນ ຜູ້ຖືກປະຕິບັດໂທດ ຕາມຄໍາຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ ຢູ່ຄ້າຍດັດສ້າງ.

ຊາວໜຸ່ມ ທີ່ຖືກດັດສ້າງ ແມ່ນ ຜູ້ຖືກສຶກສາອົບຮົມ, ດັດສ້າງທາງດ້ານບໍລິຫານ ຕໍ່ຜູ້ກະທໍາຜິດທາງອາຍາໃນສະຖານເປົ້າ ຢູ່ສູນດັດສ້າງ.

# ພາກທີ III

# ການປົກປ້ອງ, ການສົ່ງເສີມ ແລະ ການພັດທະນາຊາວໜຸ່ມລາວ

## ໝວດທີ 1

## ການປົກປ້ອງຊາວໜຸ່ມລາວ

**ມາດຕາ 23 ການປົກປ້ອງຊາວໜຸ່ມລາວ**

ການປົກປ້ອງຊາວໜຸ່ມລາວ ແມ່ນ ການນຳໃຊ້ມາດຕະການ, ວິທີການ ໃນການຄຸ້ມຄອງ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມລາວ.

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ໃຫ້ການປົກປ້ອງຊາວໜຸ່ມລາວ ຕາມແຕ່ລະປະເພດທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ຕາມແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ໃຫ້ຄຳປຶກສາ ແລະ ສ້າງກົນໄກປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ສຳລັບ ການປົກປ້ອງຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ, ຊາວໜຸ່ມ ພິການ, ຊາວໜຸ່ມ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ ນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 24, 25 ແລະ 26 ຂອງກົດໝາຍສະບັບນີ້.

**ມາດຕາ 24 ຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ**

ການຈັດຕັ້ງຊາວໜຸ່ມ, ສະຫະພັນແມ່ຍິງລາວ, ການຈັດຕັ້ງສັງຄົມ, ຄອບຄົວ ປົກປ້ອງຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ ດ້ວຍການເອົາໃຈໃສ່ໃນການສຶກສາອົບຮົມ, ຄຸ້ມຄອງການດຳລົງຊີວິດ ແລະ ການເຄື່ອນໄຫວຂອງຊາວໜຸ່ມ ເພື່ອຫຼີກລ່ຽງປາກົດການຫຍໍ້ທໍ້ທີ່ຈະເກີດກັບເຂົາເຈົ້າ, ສ້າງເງື່ອນໄຂໃນການເຄື່ອນໄຫວກິດຈະກຳທີ່ມີຜົນປະໂຫຍດຕໍ່ສັງຄົມ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແກ້ໄຂການກະທຳຜິດຂອງຊາວໜຸ່ມ.

ສະຖາບັນການສຶກສາ ປົກປ້ອງຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ ດ້ວຍການສ້າງສິ່ງອຳນວຍຄວາມສະດວກໃຫ້ການສຶກສາຮ່ຳຮຽນທີ່ມີຄຸນນະພາບ, ສະກັດກັ້ນການຮຽນແບບສັງຄົມບໍ່ດີ ແລະ ສິ່ງຫຍໍ້ທໍ້ໃນສັງຄົມ.

ຄອບຄົວ ປົກປ້ອງ ຊາວໜຸ່ມ ທີ່ບໍ່ບັນລຸນິຕິພາວະ ດ້ວຍການສຶກສາອົບຮົມ ເບິ່ງແຍງດູແລ, ໃຫ້ຄວາມຮັກ, ຄວາມອົບອຸ່ນ, ຄວາມສຸກ, ຄວາມສະເໝີພາບ ເພື່ອຫ່າງໄກຈາກສິ່ງເສບຕິດ, ສິ່ງມຶນເມົາ, ສິ່ງລາມົກ, ອະນາຈານ ແລະ ສິ່ງທີ່ຜິດກົດໝາຍ.

**ມາດຕາ 25 ຊາວໜຸ່ມ ພິການ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມພິການ ດ້ວຍກົດໝາຍ, ສຶກສາອົບຮົມ, ໃຫ້ກຽດ, ໃຫ້ຄວາມສະດວກ, ໃຫ້ການດູແລ, ການປິ່ນປົວ, ການປະກອບອາຊີບ, ສະຫວັດດີການສັງຄົມ, ການເຄື່ອນໄຫວກິລາ, ສິລະປະ, ການບໍ່ຈຳແນກ, ບໍ່ລັງກຽດ, ເຢາະເຢີ້ຍ, ສຽດສີ, ກີດກັ້ນ, ນິນທາ ທຸກຮູບແບບ.

**ມາດຕາ 26 ຊາວໜຸ່ມ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ບັນດາອົງການຈັດຕັ້ງສາກົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ປົກປ້ອງຊາວໜຸ່ມ ທີ່ມີຄວາມສ່ຽງ ແລະ ຖືກເຄາະຮ້າຍ ດ້ວຍກົດໝາຍ, ສຶກສາອົບຮົມ, ປຸກຈິດສຳນຶກ, ໃຫ້ຂໍ້ມູນ ຂ່າວສານ, ໃຫ້ຊຸດກວດແພດ, ໃຫ້ຄຳປຶກສາ, ແນະນຳຜົນຮ້າຍຂອງພະຍາດ ແລະ ການກະທຳທີ່ບໍ່ຖືກຕ້ອງ ຊຶ່ງຈະພາໃຫ້ເປັນອັນຕະລາຍຕໍ່ຊີວິດ ແລະ ສຸຂະພາບ, ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃຫ້ກຳລັງໃຈ ແລະ ໃຫ້ການຊ່ວຍເຫຼືອ.

## ໝວດທີ 2
## ການສົ່ງເສີມຊາວໜຸ່ມລາວ

**ມາດຕາ 27 ການສົ່ງເສີມຊາວໜຸ່ມລາວ**

ການສົ່ງເສີມຊາວໜຸ່ມລາວ ແມ່ນ ການໃຫ້ ການສະໜັບສະໜູນ ແລະ ການຊ່ວຍເຫຼືອ.

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ມີຄວາມຮັບຜິດຊອບໃນການສົ່ງເສີມຊາວໜຸ່ມລາວ ຕາມແຕ່ລະປະເພດທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ດ້ວຍການສຶກສາອົບຮົມ, ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ໃຫ້ຊາວໜຸ່ມລາວໄດ້ຮັບການຝຶກຝົນຫຼໍ່ຫຼອມ ແນວຄິດ, ຄຸນສົມບັດ, ທັດສະນະ, ອຸດົມການ ທີ່ຖືກຕ້ອງ ແລະ ມີຄວາມຮູ້, ຄວາມສາມາດດ້ານຕ່າງໆ.

ສຳລັບ ຊາວໜຸ່ມນັກຮຽນ, ນັກສຶກສາ, ຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ, ຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ, ຊາວໜຸ່ມ ວ່າງງານ, ຊາວໜຸ່ມ ທີ່ຕິດສິ່ງເສບຕິດ ແລະ ຊາວໜຸ່ມ ຖືກຄຸມຂັງ ແລະ ຖືກດັດສ້າງ ນັ້ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນມາດຕາ 28, 29, 30, 31, 32 ແລະ 33 ຂອງກົດໝາຍສະບັບນີ້.

**ມາດຕາ 28 ຊາວໜຸ່ມ ນັກຮຽນ, ນັກສຶກສາ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ສົ່ງເສີມຊາວໜຸ່ມ ນັກຮຽນ, ນັກສຶກສາ ດ້ວຍການເອົາໃຈໃສ່ໂຄສະນາ ປຸກຈິດສຳນຶກຄ່ານິຍົມ ໃນການຮຽນ, ການສຶກສາ, ການຝຶກອົບຮົມວິຊາຊີບໃດໜຶ່ງ ໂດຍອີງໃສ່ສະພາບ ແລະ ເງື່ອນໄຂຕົວຈິງ ຂອງບຸກຄົນ, ຄອບຄົວ ແລະ ຄວາມຕ້ອງການຂອງຕະຫຼາດແຮງງານ ໃນແຕ່ລະໄລຍະ.

**ມາດຕາ 29 ຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ແລະ ສະຖາບັນການສຶກສາ ສົ່ງເສີມຊາວໜຸ່ມ ທີ່ມີພອນສະຫວັນ ແລະ ມີຫົວຄິດປະດິດສ້າງ ໃນການ ຄົ້ນຄວ້າ, ຜະລິດ ແລະ ນຳໃຊ້ ເຂົ້າໃນວຽກງານຕົວຈິງ ດ້ວຍການໃຫ້ບຸລິມະສິດ ໃນການຮັບທຶນການສຶກສາ, ເຂົ້າເຖິງແຫຼ່ງທຶນ, ເບ້ຍລ້ຽງ, ຍ້ອງຍໍ ສັນລະເສີນ, ສອບເສັງ

ເພື່ອປັບປຸງປະກອບອາຊີບ ຕາມຄວາມຮູ້, ຄວາມສາມາດ, ສົ່ງເສີມສິ່ງທີ່ປະດິດສ້າງໃໝ່ໃຫ້ມີຜົນປະໂຫຍດຕໍ່ສັງຄົມ ພ້ອມທັງປະຕິບັດນະໂຍບາຍອື່ນທີ່ເໝາະສົມ.

### ມາດຕາ 30 ຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ສົ່ງເສີມຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ ດ້ວຍການວາງນະໂຍບາຍ, ສ້າງສີມືແຮງງານ, ສ້າງທັດສະນະແຮງງານທີ່ຖືກຕ້ອງ, ຄົ້ນຄວ້າ ນຳໃຊ້ວິທະຍາສາດ-ເຕັກນິກ ໃນການປູກ, ການລ້ຽງ, ການຜະລິດ, ປຸງແຕ່ງ ທີ່ຕິດພັນກັບການບໍລິການ ເປັນຕົ້ນການຜະລິດກະສິກຳສະອາດ, ກະສິກຳປອດສານພິດ, ພັດທະນາແນວພັນພືດ, ແນວພັນສັດ, ການປູກມອນລ້ຽງມ້ອນ, ຕໍ່ຫູກ ທໍໄໝ, ຄວັດ, ແຕ້ມ, ແກະສະຫຼັກ, ຈັກສານ, ຫຍິບ, ປັກ, ຖັກ ແສ່ວ, ເຄື່ອງປັ້ນດິນເຜົາ.

ລັດ ອອກນິຕິກຳ ໃນການກຳນົດລາຄາສິນຄ້າກະສິກຳ ແລະ ຫັດຖະກຳ, ຄຸ້ມຄອງ ພາສີ, ອາກອນການສົ່ງອອກ ແລະ ນຳເຂົ້າ ພ້ອມທັງມີນະໂຍບາຍໃຫ້ສິນເຊື່ອແກ່ທຸລະກິດຂອງຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ, ສົ່ງເສີມ ໃຫ້ຜະລິດສິນຄ້າສົ່ງອອກໄປຕ່າງປະເທດ ແລະ ຊົມໃຊ້ຜະລິດຕະພັນພາຍໃນ.

### ມາດຕາ 31 ຊາວໜຸ່ມ ວ່າງງານ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ມີຄວາມຮັບຜິດຊອບຕໍ່ຊາວໜຸ່ມວ່າງງານ ດ້ວຍການໂຄສະນາ ເຜີຍແຜ່ກົດໝາຍທີ່ກ່ຽວຂ້ອງ, ສ້າງທັດສະນະແຮງງານ, ປຸກຈິດສຳນຶກ ແລະ ສ້າງຄ່ານິຍົມ ກ່ຽວກັບວິຊາຊີບທີ່ຖືກຕ້ອງ, ເໝາະສົມ ເພື່ອສົ່ງເສີມໃຫ້ເຂົ້າເຖິງຕະຫຼາດແຮງງານ ແລະ ສ້າງງານດ້ວຍຕົນເອງ.

### ມາດຕາ 32 ຊາວໜຸ່ມ ທີ່ຕິດສິ່ງເສບຕິດ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ, ນິຕິບຸກຄົນ ມີຄວາມຮັບຜິດຊອບຕໍ່ຊາວໜຸ່ມທີ່ຕິດສິ່ງເສບຕິດ ດ້ວຍການຊ່ວຍເຫຼືອເຂົາເຈົ້າໄດ້ຮັບການບຳບັດ, ສຶກສາອົບຮົມແນວຄິດ, ໃຫ້ຄຳແນະນຳ, ໃຫ້ຄຳປຶກສາ, ໃຫ້ຂໍ້ມູນຂ່າວສານ ເພື່ອໃຫ້ຊາວໜຸ່ມດັ່ງກ່າວຕັດໃຈອອກຈາກສິ່ງເສບຕິດ, ຕັ້ງໜ້າຟື້ນຟູສຸຂະພາບໃຫ້ເຂັ້ມແຂງ ເພື່ອສົ່ງເສີມໃຫ້ກາຍເປັນພົນລະເມືອງດີຂອງຊາດ.

### ມາດຕາ 33 ຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ

ການຈັດຕັ້ງຂອງລັດ, ອົງການຈັດຕັ້ງມະຫາຊົນ ແລະ ຄອບຄົວ ມີຄວາມຮັບຜິດຊອບຕໍ່ຊາວໜຸ່ມທີ່ຖືກຄຸມຂັງ ແລະ ຖືກດັດສ້າງ ດ້ວຍການຊ່ວຍເຫຼືອເຂົາເຈົ້າໄດ້ຮັບການສຶກສາອົບຮົມແນວຄິດ, ໃຫ້ຄຳປຶກສາ, ປຸກຈິດສຳນຶກ, ມີນະໂຍບາຍເບິ່ງແຍງຊີວິດການເປັນຢູ່, ປິ່ນປົວ ແລະ ຟື້ນຟູສຸຂະພາບ ເພື່ອສົ່ງເສີມໃຫ້ເຂົາເຈົ້າຫັນປ່ຽນແນວຄິດກັບມາເປັນພົນລະເມືອງດີຂອງຊາດ.

## ໝວດທີ 3
## ການພັດທະນາຊາວໜຸ່ມລາວ

### ມາດຕາ 34 ການພັດທະນາຊາວໜຸ່ມລາວ

ການພັດທະນາ ຊາວໜຸ່ມລາວ ແມ່ນ ການປັບປຸງ ແລະ ປ່ຽນແປງ ຈາກອັນເກົ່າທີ່ຫຼ້າຫຼັງໄປສູ່ອັນໃໝ່ທີ່ດີກວ່າ.

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ເອົາໃຈໃສ່ພັດທະນາຊາວໜຸ່ມລາວ ຕາມແຕ່ລະປະເພດທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ດ້ວຍການ ໃຫ້ໂອກາດ, ອຳນວຍຄວາມສະດວກ ແລະ ສ້າງເງື່ອນໄຂ ໄດ້ບຳລຸງຮ່າງກາຍ ແລະ ຈິດໃຈໃຫ້ເຂັ້ມແຂງ; ສ້າງແນວຄິດ, ອຸດົມການໃຫ້ມີຄວາມໝັ້ນແກ່ນ; ຍົກລະດັບ ການສຶກສາ, ພາສາຕ່າງປະເທດ, ການຄົ້ນຄວ້າ ດ້ານເຕັກນິກ, ວິທະຍາສາດ, ເຕັກໂນໂລຊີ, ດ້ານວິຊາຊີບ, ດ້ານວັດທະນະທຳ ເພື່ອໃຫ້ຊາວໜຸ່ມລາວ ມີຄວາມຮູ້, ຄວາມສາມາດ, ມີຈັນຍາບັນ, ຈັນຍາທຳ ແລະ ຄຸນນະທຳ.

ສຳລັບ ການພັດທະນາຊາວໜຸ່ມ ນັກຮຽນ, ນັກສຶກສາ, ຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ, ຊາວໜຸ່ມ ດ້ອຍໂອກາດ, ຊາວໜຸ່ມ ພິການ, ຊາວໜຸ່ມ ທີ່ຕິດສິ່ງເສບຕິດ ແລະ ຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ ນັ້ນ ຍັງຕ້ອງໃຫ້ປະຕິບັດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35, 36, 37, 38, 39 ແລະ 40 ຂອງກົດໝາຍສະບັບນີ້.

### ມາດຕາ 35 ຊາວໜຸ່ມ ນັກຮຽນ, ນັກສຶກສາ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ພັດທະນາຊາວໜຸ່ມ ນັກຮຽນ, ນັກສຶກສາ ທາງດ້ານຮ່າງກາຍ, ຈິດໃຈ, ສະຕິປັນຍາ, ຄຸນສົມບັດ, ຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ ເຂົ້າໃນການພັດທະນາວຽກງານຊາວໜຸ່ມ-ເຍົາວະຊົນ.

### ມາດຕາ 36 ຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ບຸກຄົນ ແລະ ນິຕິບຸກຄົນ ມີສ່ວນຮ່ວມໃນການພັດທະນາຊາວໜຸ່ມ ກຳມະກອນ, ກະສິກອນ ແລະ ຊ່າງຫັດຖະກຳ ດ້ວຍການຝຶກອົບຮົມ, ທັດສະນະສຶກສາ, ຖອດຖອນບົດຮຽນ, ຍົກລະດັບ ຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ ດ້ານກະສິກຳ ແລະ ຫັດຖະກຳ, ນຳໃຊ້ເຕັກນິກ, ວິທະຍາສາດ, ເຕັກໂນໂລຊີ, ປະດິດສ້າງໃໝ່ ໃນການພັດທະນາຜະລິດຕະພັນກະສິກຳ ແລະ ຫັດຖະກຳທີ່ມີຄຸນນະພາບ ເພື່ອສາມາດແຂ່ງຂັນຢູ່ພາຍໃນ ແລະ ຕ່າງປະເທດ.

### ມາດຕາ 37 ຊາວໜຸ່ມ ດ້ອຍໂອກາດ

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ມີຄວາມຮັບຜິດຊອບໃນການພັດທະນາຊາວໜຸ່ມ

ດ້ອຍໂອກາດ ດ້ວຍການ ປຸກຈິດສຳນຶກ, ການສຶກສາ, ສົ່ງເສີມສຸຂະພາບ, ຝຶກອົບຮົມວິຊາຊີບ, ສະໜອງຂໍ້ມູນຂ່າວສານ, ວັດທະນະທຳ, ຮີດຄອງປະເພນີທີ່ດີງາມ, ວຽກເຮັດງານທຳ, ເປັນເຈົ້າການພັດທະນາ, ສ້າງແຫຼ່ງລາຍຮັບ ໃຫ້ຕົນເອງ ແລະ ຄອບຄົວ.

**ມາດຕາ 38 ຊາວໜຸ່ມ ພິການ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ເອົາໃຈໃສ່ພິເສດໃນການພັດທະນາຊາວໜຸ່ມ ພິການ ດ້ວຍການ ໃຫ້ຄວາມອົບອຸ່ນ, ປຸກຈິດສຳນຶກ, ໃຫ້ການສຶກສາທີ່ເທົ່າທຽມ, ສົ່ງເສີມສຸຂະພາບໃຫ້ແຂງແຮງ, ຝຶກອົບຮົມວິຊາຊີບ ໃຫ້ມີວຽກເຮັດງານທຳ, ມີລາຍຮັບໃຫ້ແກ່ຕົນເອງ ແລະ ຄອບຄົວ ຕາມຄວາມສາມາດ ແລະ ເງື່ອນໄຂຕົວຈິງ.

**ມາດຕາ 39 ຊາວໜຸ່ມ ທີ່ຕິດສິ່ງເສບຕິດ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ຄອບຄົວ, ບຸກຄົນ ແລະ ນິຕິບຸກຄົນ ເປັນເຈົ້າການໃນການພັດທະນາຊາວໜຸ່ມ ທີ່ຕິດສິ່ງເສບຕິດ ດ້ວຍການຟື້ນຟູສຸຂະພາບ, ສຶກສາອົບຮົມແນວຄິດ, ຝຶກອົບຮົມວິຊາຊີບ, ເຄື່ອນໄຫວກິດຈະກຳເປັນຕົ້ນ ກິລາ, ສິລະປະ, ອອກແຮງງານ, ມີວຽກເຮັດງານທຳ ໃຫ້ກາຍເປັນພົນລະເມືອງດີ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

**ມາດຕາ 40 ຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ**

ການຈັດຕັ້ງຂອງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ຄອບຄົວ ມີຄວາມຮັບຜິດຊອບໃນການພັດທະນາຊາວໜຸ່ມ ທີ່ຖືກຄຸມຂັງ ແລະ ຖືກດັດສ້າງ ດ້ວຍການ ສຶກສາອົບຮົມ, ຮັກສາສຸຂະພາບ, ຍົກສູງຄຸນນະພາບຊີວິດ, ຝຶກອົບຮົມວິຊາຊີບ ແລະ ຄວາມຮູ້ດ້ານຕ່າງໆ ທີ່ເໝາະສົມ.

## ພາກທີ IV
## ສິດ, ໜ້າທີ່, ພັນທະ ແລະ ຜົນປະໂຫຍດ ຂອງຊາວໜຸ່ມລາວ
### ໝວດທີ 1
### ສິດ, ໜ້າທີ່ ແລະ ພັນທະ ຂອງຊາວໜຸ່ມລາວ

**ມາດຕາ 41 ສິດ ຂອງຊາວໜຸ່ມລາວ**

ຊາວໜຸ່ມລາວ ມີສິດ ດັ່ງນີ້:

1. ປ່ອນບັດເລືອກຕັ້ງ, ສະໝັກຮັບເລືອກຕັ້ງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ;
2. ດຳລົງຊີວິດ, ເລືອກອາຊີບ ແລະ ປະກອບທຸລະກິດ ທີ່ຖືກຕ້ອງຕາມກົດໝາຍ;
3. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ຕາມກົດໝາຍ;

4. ໄດ້ຮັບການສຶກສາ, ຄົ້ນຄວ້າ, ຮໍ່າຮຽນ, ພັດທະນາຕົນເອງ, ຝຶກອົບຮົມ, ບຳລຸງ, ຍົກລະດັບວິຊາຊີບດ້ານຕ່າງໆ;

5. ໄດ້ຮັບຂໍ້ມູນ ຂ່າວສານ ທີ່ເປັນປະໂຫຍດ;

6. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 42 ໜ້າທີ່ ຂອງຊາວໜຸ່ມລາວ**

ຊາວໜຸ່ມລາວ ມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ຮໍ່າຮຽນ, ຝຶກຝົນຫຼໍ່ຫຼອມຕົນເອງໃຫ້ກາຍເປັນກຳລັງແຮງໃນທຸກຂົງເຂດວຽກງານ ແລະ ກາຍເປັນຜູ້ສືບທອດທີ່ດີຂອງປະເທດຊາດ;

2. ເຄື່ອນໄຫວວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

3. ປົກປັກຮັກສາອະນຸລັກ, ເສີມຂະຫຍາຍວັດທະນະທຳ ຮີດຄອງປະເພນີອັນດີງາມຂອງຊາດ, ຂອງເຜົ່າ;

4. ປົກປັກຮັກສາສິ່ງແວດລ້ອມ ແລະ ສ້າງກິດຈະກຳອື່ນ ທີ່ເປັນປະໂຫຍດແກ່ສັງຄົມ ແລະ ບໍ່ຂັດກັບກົດໝາຍ;

5. ເຄື່ອນໄຫວກິລາ ກາຍຍະກຳ, ສິລະປະ ວັນນະຄະດີ ທີ່ບໍ່ຂັດກັບກົດໝາຍ;

6. ເປັນເຈົ້າການຕ້ານ ແລະ ສະກັດກັ້ນປາກົດການຫຍໍ້ທໍ້ໃນສັງຄົມ;

7. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 43 ພັນທະຂອງຊາວໜຸ່ມລາວ**

ຊາວໜຸ່ມລາວ ມີພັນທະ ດັ່ງນີ້:

1. ເຄົາລົບ, ປະຕິບັດ ລັດຖະທຳມະນູນ ແລະ ກົດໝາຍຢ່າງເຂັ້ມງວດ;

2. ສຶກສາຮໍ່າຮຽນ, ຝຶກຝົນຫຼໍ່ຫຼອມຕົນເອງ, ຮຽນວິຊາຊີບ, ສ້າງວຽກເຮັດງານທຳ ທີ່ຖືກຕ້ອງຕາມກົດໝາຍ;

3. ເຄົາລົບນັບຖື, ເບິ່ງແຍງ ລ້ຽງດູ, ໃຫ້ການຊ່ວຍເຫຼືອ ພໍ່ແມ່, ຜູ້ປົກຄອງ ແລະ ຄອບຄົວ;

4. ເຄົາລົບ ແລະ ຊ່ວຍເຫຼືອຜູ້ຊົງຄຸນອຸດທີ, ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ, ຜູ້ທຸກຍາກ, ຄົນພິການ, ຜູ້ອາຍຸສູງ ແລະ ຜູ້ດ້ອຍໂອກາດ;

5. ຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ເປັນຕົ້ນ ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເສດຖະກິດ-ສັງຄົມ ແລະ ການອອກແຮງງານ;

6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ຜົນປະໂຫຍດຂອງຊາວໜຸ່ມລາວ

**ມາດຕາ 44 ຜົນປະໂຫຍດທາງດ້ານຈິດໃຈ**

ຜົນປະໂຫຍດທາງດ້ານຈິດໃຈ ມີ ດັ່ງນີ້:

1. ໄດ້ຮັບການສ້າງ, ບຳລຸງ, ຍົກລະດັບຄວາມຮູ້, ຄວາມສາມາດ, ຄວາມຊຳນານງານ, ວິຊາຊີບ ຕາມເງື່ອນໄຂຕົວຈິງ;
2. ໄດ້ຮັບນາມມະຍົດຕ່າງໆ ຕາມຜົນງານ ແລະ ການຄົ້ນຄວ້າປະດິດສ້າງສິ່ງໃໝ່ທີ່ມີຜົນປະໂຫຍດ ໃຫ້ແກ່ການປົກປັກຮັກສາ ແລະ ພັດທະນາປະເທດຊາດ ແລະ ການຍ້ອງຍໍ ຕາມລະບຽບການ;
3. ໄດ້ຮັບການຄົ້ນຄວ້າ ສັບຊ້ອນເຂົ້າໃນຕຳແໜ່ງງານ ຂອງລັດ, ເອກະຊົນ ຕາມຄວາມຮູ້, ຄວາມສາມາດ ແລະ ເງື່ອນໄຂຕົວຈິງ;
4. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ ໃນກໍລະນີທີ່ຖືກລະເມີດ.

ສຳລັບຊາວໜຸ່ມລາວ ຜູ້ທີ່ບໍ່ແມ່ນສະມາຊິກ ຂອງອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ ນັ້ນ ຖ້າຫາກມີເງື່ອນໄຂ, ມາດຕະຖານ ແລະ ມີຄວາມຕື່ນຕົວສະໝັກໃຈ ຈະຖືກສະເໜີໃຫ້ອົງການຈັດຕັ້ງດັ່ງກ່າວ ພິຈາລະນາ ຮັບເຂົ້າເປັນສະມາຊິກຂອງຕົນ.

**ມາດຕາ 45 ຜົນປະໂຫຍດທາງດ້ານວັດຖຸ**

ຜົນປະໂຫຍດທາງດ້ານວັດຖຸ ມີ ດັ່ງນີ້:

1. ໄດ້ຮັບຄ່າແຮງງານ, ເງິນເດືອນ ແລະ ນະໂຍບາຍ ຕາມກົດໝາຍ;
2. ໄດ້ຮັບເງິນອຸດໜູນ, ນະໂຍບາຍສະຫວັດດີການສັງຄົມ ແລະ ຜົນປະໂຫຍດອື່ນ ຕາມກົດໝາຍ.

# ພາກທີ V
# ການຈັດຕັ້ງຊາວໜຸ່ມລາວ

**ມາດຕາ 46 ການຈັດຕັ້ງຊາວໜຸ່ມລາວ**

ການຈັດຕັ້ງຊາວໜຸ່ມລາວ ແມ່ນ ການຈັດຕັ້ງການເມືອງ ແລະ ສັງຄົມ ແບບຕື່ນຕົວສະໝັກໃຈຂອງ ຊາວໜຸ່ມ ເພື່ອສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີ ແລະ ປຸກລະດົມຊາວໜຸ່ມລາວບັນດາເຜົ່າ ເຂົ້າຮ່ວມ ພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ; ເສີມຂະຫຍາຍສິດເປັນເຈົ້າຂອງປະເທດຊາດ, ປົກປ້ອງ ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມລາວ.

ການຈັດຕັ້ງຂອງຊາວໜຸ່ມລາວ ມີ ດັ່ງນີ້:

1. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;
2. ສະຫະພັນຊາວໜຸ່ມລາວ.

**ມາດຕາ 47 ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແມ່ນ ໜຶ່ງໃນອົງການຈັດຕັ້ງມະຫາຊົນ ໃນລະບົບການເມືອງຂອງລະບອບປະຊາທິປະໄຕປະຊາຊົນ ທີ່ມີພັກປະຊາຊົນປະຕິວັດລາວເປັນແກນນຳ, ເປັນການຈັດຕັ້ງຂອງຊາວໜຸ່ມລາວ ຜູ້ຫ້າວຫັນ, ກ້າວໜ້າ, ໄດ້ຜ່ານການຝຶກຝົນຫຼໍ່ຫຼອມ ຈາກຂະບວນການຂອງມະຫາຊົນ.

**ມາດຕາ 48 ສະຫະພັນຊາວໜຸ່ມລາວ**

ສະຫະພັນຊາວໜຸ່ມລາວ ແມ່ນ ການຈັດຕັ້ງສັງຄົມຂອງຊາວໜຸ່ມລາວ ໂດຍແມ່ນຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນແກນນຳ, ຈັດຕັ້ງ ແລະ ເຄື່ອນໄຫວຕາມລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຂອງລັດ ຊຶ່ງມີ ສະມາຄົມ, ສະໂມສອນ, ກອງອາສາສະໝັກຊາວໜຸ່ມ, ກຸ່ມຄົນ ຂອງຊາວໜຸ່ມລາວບັນດາເຜົ່າ ເປັນການຈັດຕັ້ງຂອງຊາວໜຸ່ມທີ່ມີຄວາມຕື່ນຕົວເຂົ້າເປັນສະມາຊິກ ໂດຍບໍ່ຈຳແນກຊົນຄົນ, ສາສະໜາ, ຄວາມເຊື່ອຖື, ເພດ, ສາຂາອາຊີບ.

ລະບົບການຈັດຕັ້ງຂອງສະຫະພັນຊາວໜຸ່ມລາວ ມີ ສາມຂັ້ນ ຄື:

1. ສະຫະພັນຊາວໜຸ່ມລາວຂັ້ນສູນກາງ ຊຶ່ງໄດ້ຮັບການອະນຸຍາດສ້າງຕັ້ງຈາກຄະນະເລຂາທິການສູນກາງພັກ ໂດຍມອບໃຫ້ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ຄຸ້ມຄອງ, ນຳພາການຈັດຕັ້ງ ແລະ ເຄື່ອນໄຫວຕາມກົດລະບຽບຂອງ ສະຫະພັນຊາວໜຸ່ມລາວ;

2. ສະຫະພັນຊາວໜຸ່ມລາວ ແຂວງ, ນະຄອນຫຼວງ ຊຶ່ງໄດ້ຮັບການອະນຸຍາດສ້າງຕັ້ງຈາກຄະນະປະຈຳພັກ ແຂວງ, ນະຄອນຫຼວງ ໂດຍມອບໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແຂວງ, ນະຄອນຫຼວງ ເປັນຜູ້ນຳພາດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຕາມກົດລະບຽບຂອງ ສະຫະພັນຊາວໜຸ່ມລາວ;

3. ສະຫະພັນຊາວໜຸ່ມລາວ ເມືອງ, ເທດສະບານ, ນະຄອນ ຊຶ່ງໄດ້ຮັບການອະນຸຍາດສ້າງຕັ້ງຈາກຄະນະປະຈຳພັກເມືອງ, ເທດສະບານ, ນະຄອນ ໂດຍມອບໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເມືອງ, ເທດສະບານ, ນະຄອນ ເປັນຜູ້ນຳພາດ້ານການຈັດຕັ້ງ ແລະ ການເຄື່ອນໄຫວ ຕາມກົດລະບຽບຂອງສະຫະພັນຊາວໜຸ່ມລາວ.

ສຳລັບການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະຫະພັນຊາວໜຸ່ມລາວແຕ່ລະຂັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 49 ຂໍ້ຫ້າມສຳລັບຊາວໜຸ່ມລາວ**

ຫ້າມຊາວໜຸ່ມລາວ ມີພຶດຕິກຳ ດັ່ງນີ້:

1. ມົ້ວສຸມ, ຂົນສົ່ງ, ຜະລິດ, ປຸງແຕ່ງ, ຊື້ ຂາຍ, ຄອບຄອງ, ເຊື່ອງອຳ, ປົກປັງ ສິ່ງເສບຕິດ, ສິ່ງມຶນເມົາທີ່ຜິດກົດໝາຍ;

2. ຊື້ ຂາຍປະເວນີ, ເຜີຍແຜ່ສິ່ງລາມົກ, ອະນາຈານ, ຫຼິ້ນການພະນັນ; ຜະລິດ, ຈຳໜ່າຍ, ເຜີຍແຜ່, ຊົມໃຊ້ຜະລິດຕະພັນວັດທະນະທຳ ຫຼື ມີພຶດຕິກຳທີ່ຂັດກັບວັດທະນະທຳອັນດີງາມຂອງຊາດ; ແຕ່ງຄອງກ່ອນໄວອາຍຸ, ນຳໃຊ້ສື່ສັງຄົມອອນລາຍ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

3. ຜະລິດ, ຊື້ ຂາຍ, ຄອບຄອງ ແລະ ນຳໃຊ້ອາວຸດ ທຸກຊະນິດ, ວັດຖຸລະເບີດ, ສານພິດທຸກຊະນິດ ເພື່ອຈຸດປະສົງໃດໜຶ່ງທີ່ຜິດກົດໝາຍ;

4. ແບ່ງແຍກຄວາມສາມັກຄີບັນດາເຜົ່າ, ສາສະໜາ, ກໍ່ການປັ່ນປ່ວນ, ໃສ່ຮ້າຍປ້າຍສີ, ຈັດຕັ້ງເປັນກຸ່ມກ້ອນ, ໂຮມຊຸມນຸມ ແລະ ເດີນຂະບວນ ທີ່ຂັດກັບກົດໝາຍ, ສ້າງຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ມາດຕາ 50 ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຊາວໜຸ່ມ ເພື່ອຫາຜົນປະໂຫຍດໃຫ້ຕົນ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

2. ຂັດຂວາງ, ນາບຂູ່, ບໍ່ສ້າງເງື່ອນໄຂ, ບໍ່ອຳນວຍຄວາມສະດວກ ໃຫ້ແກ່ຊາວໜຸ່ມໃນການເຄື່ອນໄຫວທີ່ເປັນປະໂຫຍດຕໍ່ສັງຄົມ;

3. ໂຄສະນາ ຊວນເຊື່ອກ່ຽວກັບສິ່ງເສບຕິດ, ສິ່ງມືນເມົາ, ສິ່ງລາມົກ, ໃຫ້ຂໍ້ມູນ ຂ່າວສານ ທີ່ບໍ່ຖືກຕ້ອງ, ສ້າງສິ່ງຈູງໃຈ, ຊັກຊວນ, ຊື້ຈ້າງຈອບອອຍ ແລະ ເບື່ອເມົາຊາວໜຸ່ມ;

4. ປົກປ້ອງ, ເມີນເສີຍ, ຂູ່ກຸ່ມ, ສົ່ງເສີມ ຊາວໜຸ່ມທີ່ມີການກະທຳ ຫຼື ຈະກະທຳສິ່ງໃດໜຶ່ງ ທີ່ບໍ່ຖືກຕ້ອງ;

5. ບໍ່ໃຫ້ກຽດ, ບໍ່ໃຫ້ຄວາມສະເໝີພາບ, ຂູດຮີດແຮງງານ, ຂູດຮີດທາງເພດ ຫຼື ໃຊ້ຄວາມຮຸນແຮງຕໍ່ຊາວໜຸ່ມ ໃນທຸກຮູບແບບ;

6. ນຳໃຊ້ບັນດາ ພື້ນຖານໂຄງລ່າງເຄື່ອນໄຫວວັດທະນະທຳ, ກິລາ, ສິລະປະ ຂອງຊາວໜຸ່ມ ເຂົ້າໃນຈຸດປະສົງອື່ນ ທີ່ສົ່ງຜົນສະທ້ອນເຖິງການຈັດຕັ້ງ ແລະ ການເຄື່ອນໄຫວຂອງຊາວໜຸ່ມ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VII
# ການຄຸ້ມຄອງ ແລະ ກວດກາຊາວໜຸ່ມລາວ
## ໝວດທີ 1
## ການຄຸ້ມຄອງຊາວໜຸ່ມລາວ

## ມາດຕາ 51 ອົງການຄຸ້ມຄອງຊາວໜຸ່ມລາວ

ລັດຖະບານ ເປັນຜູ້ຄຸ້ມຄອງຊາວໜຸ່ມລາວ ຢ່າງລວມສູນ ແລະ ເປັນເອກະພາບ ທົ່ວປະເທດໂດຍມອບໃຫ້ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງຊາວໜຸ່ມລາວ ປະກອບດ້ວຍ:

1. ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ;

2. ສະຫະພັນຊາວໜຸ່ມລາວ;

3. ການຈັດຕັ້ງຂອງລັດ;

4. ການຈັດຕັ້ງຂອງພາກສ່ວນອື່ນ.

**ມາດຕາ 52 ສິດ ແລະ ໜ້າທີ່ຂອງຄະນະຊາວໜຸ່ມປະຊາຊົນປະຕິວັດລາວ**

ໃນການຄຸ້ມຄອງຊາວໜຸ່ມລາວ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ນິຕິກຳອື່ນ ກ່ຽວກັບວຽກງານຊາວໜຸ່ມ;

2. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບຊາວໜຸ່ມ ເປັນ ແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວຂ້ອງ ໃຫ້ທົ່ວສັງຄົມ;

4. ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມຊາວໜຸ່ມລາວບັນດາເຜົ່າ ໃຫ້ມີຄຸນສົມບັດ ສິນທຳປະຕິວັດ, ມີນ້ຳໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຂອງເຜົ່າ ລວມທັງສະໜອງຂໍ້ມູນ ຂ່າວສານ ທີ່ຈຳເປັນໃຫ້ຊາວໜຸ່ມ;

5. ສ້າງຂະບວນການຂອງຊາວໜຸ່ມ ເພື່ອຈັດຕັ້ງປະຕິບັດແນວທາງ, ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

6. ສ້າງຕັ້ງການຈັດຕັ້ງຊາວໜຸ່ມ ຢູ່ໃນທຸກຂົງເຂດວຽກງານທີ່ມີຊາວໜຸ່ມສັງກັດຢູ່ ແລະ ປັບປຸງການຈັດຕັ້ງຊາວໜຸ່ມ ໃນບ່ອນທີ່ມີແລ້ວ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ;

7. ສົ່ງເສີມ ຫົວຄິດປະດິດສ້າງ, ຄົ້ນຄວ້າການປະດິດສ້າງສິ່ງໃໝ່ ຂອງຊາວໜຸ່ມລາວບັນດາເຜົ່າ ເພື່ອຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ;

8. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ລວມທັງໂຮງຮຽນ, ສະຖາບັນຕ່າງໆ ເພື່ອຄຸ້ມຄອງ ແລະ ພັດທະນາວຽກງານຊາວໜຸ່ມ;

9. ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊາວໜຸ່ມ, ເຍົາວະຊົນ ແລະ ອະນຸຊົນ;

10. ປະກອບຄຳເຫັນ ຕໍ່ແນວທາງ, ແຜນນະໂຍບາຍ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ເປັນຕົ້ນ ບັນຫາທີ່ກ່ຽວພັນກັບວຽກງານຂອງຊາວໜຸ່ມ, ເຍົາວະຊົນ, ອະນຸຊົນ;

11. ຄຸ້ມຄອງສະຫະພັນຊາວໜຸ່ມແຫ່ງຊາດລາວ;

12. ພົວພັນຮ່ວມມື ກັບຕ່າງປະເທດ ຕາມການມອບໝາຍ ຫຼື ຕາມການອະນຸຍາດ;

13. ຕິດຕາມກວດກາການເຄື່ອນໄຫວຂອງສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມທີ່ໄດ້ກຳນົດໄວ້ໃນລັດຖະທຳມະນູນ ແລະ ກົດໝາຍ;

14. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານຂອງຕົນໃຫ້ຂັ້ນເທິງ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 53 ສິດ ແລະ ໜ້າທີ່ຂອງສະຫະພັນຊາວໜຸ່ມລາວ**

ໃນການຄຸ້ມຄອງຊາວໜຸ່ມລາວ ສະຫະພັນຊາວໜຸ່ມລາວ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ເຊື່ອມຊຶມ, ຜັນຂະຫຍາຍແນວທາງ, ນະໂຍບາຍ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍ, ລະບຽບການຂອງລັດ ມາເປັນ ແຜນງານ, ໂຄງການ ແລະ ກິດຈະກຳ ເຄື່ອນໄຫວໃນແຕ່ລະໄລຍະ;

2. ເຕົ້າໂຮມຄວາມສາມັກຄີ, ສຶກສາອົບຮົມສະມາຊິກໃຫ້ມີ ຄຸນສົມບັດ, ຈະລິຍະທຳ, ນ້ຳໃຈຮັກຊາດ, ຮູ້ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທຳອັນດີງາມຂອງຊາດ, ຕ້ານ ແລະ ສະກັດກັ້ນປັນຫາປາກົດການຫຍໍ້ທໍ້ໃນຖັນແຖວຊາວໜຸ່ມ;

3. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ທີ່ກ່ຽວຂ້ອງກັບສະຫະພັນຊາວໜຸ່ມລາວ;

4. ປັບປຸງການຈັດຕັ້ງໃຫ້ໜັກແໜ້ນ, ເຂັ້ມແຂງ ແລະ ເຄື່ອນໄຫວໃຫ້ມີປະສິດທິຜົນ;

5. ຄຸ້ມຄອງ, ຊຸກຍູ້, ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາການຈັດຕັ້ງສັງຄົມຂອງຊາວໜຸ່ມ ແລະ ບຸກຄົນທີ່ເຮັດວຽກຢູ່ບັນດາອົງການຈັດຕັ້ງສັງຄົມຂອງຊາວໜຸ່ມລາວ;

6. ປະກອບຄຳເຫັນຕໍ່ແຜນພັດທະນາຊາວໜຸ່ມ, ເຍົາວະຊົນ ແລະ ແຜນການເຄື່ອນໄຫວອື່ນ ທີ່ພົວພັນກັບວຽກງານຊາວໜຸ່ມ ໃນແຕ່ລະໄລຍະ;

7. ສະເໜີສະມາຊິກຂອງຕົນອອກສະໝັກຮັບເລືອກຕັ້ງເຂົ້າໃນອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງສັງຄົມ;

8. ສ້າງເງື່ອນໄຂໃຫ້ຊາວໜຸ່ມໄດ້ ຮັບການຝຶກອົບຮົມ, ສົ່ງເສີມວິຊາຊີບ ແລະ ສາມາດປະກອບອາຊີບໄດ້;

9. ປຸກລະດົມ, ຊຸກຍູ້ ເສີມຂະຫຍາຍກຳລັງແຮງ ຫົວຄິດປະດິດສ້າງ, ສະຕິປັນຍາຂອງສະມາຊິກ ແລະ ການຈັດຕັ້ງທີ່ເຮັດວຽກກ່ຽວກັບຊາວໜຸ່ມ ໃຫ້ມີນ້ຳໃຈເສຍສະຫຼະ ເວລາ, ເຫື່ອແຮງ, ສະຕິປັນຍາ ແລະ ວັດຖຸປັດໄຈ ປະກອບສ່ວນໃຫ້ສັງຄົມ ແລະ ປະເທດຊາດ;

10. ສ້າງກົນໄກໃນການປົກປ້ອງສິດ, ຜົນປະໂຫຍດອັນຊອບທຳ, ສົ່ງເສີມ ແລະ ພັດທະນາຊາວໜຸ່ມລາວບັນດາເຜົ່າ;

11. ເປັນເຈົ້າການປະສານສົມທົບກັບອົງການຈັດຕັ້ງພາຍໃນ ແລະ ຕ່າງປະເທດ, ຍາດແຍ່ງການສະໜັບສະໜູນ ແລະ ການຊ່ວຍເຫຼືອ ຕາມການມອບໝາຍ;

12. ຄຸ້ມຄອງ, ນຳໃຊ້ງົບປະມານ, ທຶນຊ່ວຍເຫຼືອ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ສາມາດກວດສອບໄດ້;

13. ສ້າງຕັ້ງກອງທຶນເພື່ອນຳໃຊ້ເຂົ້າໃນວຽກງານສະຫະພັນຊາວໜຸ່ມລາວ;

14. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກ່ຽວກັບຊາວໜຸ່ມ ໃຫ້ຂັ້ນເທິງ;

15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 ສິດ ແລະ ໜ້າທີ່ຂອງການຈັດຕັ້ງຂອງລັດ**

ໃນການຄຸ້ມຄອງຊາວໜຸ່ມລາວ ການຈັດຕັ້ງຂອງລັດ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍນະໂຍບາຍ, ຍຸດທະສາດ, ກົດໝາຍ ກ່ຽວກັບຊາວໜຸ່ມ ເປັນແຜນການ, ແຜນງານ, ໂຄງການຂອງຕົນ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ ເຜີຍແຜ່, ສຶກສາອົບຮົມ ແນວທາງ ນະໂຍບາຍ, ກົດໝາຍ ກ່ຽວກັບຊາວໜຸ່ມ;

3. ສ້າງ, ບຳລຸງພະນັກງານ ຊາວໜຸ່ມຂອງຕົນ;

4. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດແນວທາງ ນະໂຍບາຍ, ກົດໝາຍ ກ່ຽວກັບຊາວໜຸ່ມ;

5. ສ້າງເງື່ອນໄຂໃຫ້ການຈັດຕັ້ງຊາວໜຸ່ມ ມີລາຍຮັບເຂົ້າໃນການເຄື່ອນໄຫວກິດຈະກຳຕ່າງໆ ທີ່ຖືກຕ້ອງຕາມກົດໝາຍ;

6. ເກັບກຳສະຖິຕິ ແລະ ຂໍ້ມູນ ກ່ຽວກັບຊາວໜຸ່ມ;

7. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ໃຫ້ການຈັດຕັ້ງຊາວໜຸ່ມໄດ້ເຄື່ອນໄຫວ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 55 ສິດ ແລະ ໜ້າທີ່ຂອງພາກສ່ວນອື່ນ**

ພາກສ່ວນອື່ນ ເປັນຕົ້ນ ສະຖາບັນການສຶກສາ, ໂຮງຈັກ,ໂຮງງານ, ບຸກຄົນ, ນິຕິບຸກຄົນ ແລະ ຄອບຄົວ ມີສິດ ແລະ ໜ້າທີ່ ປະສານສົມທົບ, ຮ່ວມມື ກັບ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສະຫະພັນຊາວໜຸ່ມລາວ ໃນການຄຸ້ມຄອງ, ປົກປ້ອງ, ສົ່ງເສີມ, ພັດທະນາຊາວໜຸ່ມລາວ ແລະ ສ້າງເງື່ອນໄຂ, ອຳນວຍຄວາມສະດວກ ຕາມພັນທະ ແລະ ຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ການກວດກາຊາວໜຸ່ມລາວ

**ມາດຕາ 56 ອົງການກວດກາຊາວໜຸ່ມລາວ**

ອົງການກວດກາຊາວໜຸ່ມ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງຊາວໜຸ່ມລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ ແລະ ອົງການກວດສອບແຫ່ງລັດ.

**ມາດຕາ 57 ເນື້ອໃນການກວດກາ**

ການກວດກາ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການນຳໃຊ້ສິດ, ປະຕິບັດໜ້າທີ່, ຄວາມຮັບຜິດຊອບ, ແບບແຜນວິທີເຮັດວຽກ ຂອງອົງການຄຸ້ມຄອງຊາວໜຸ່ມລາວ ໃນການປົກປ້ອງ, ສົ່ງເສີມ ແລະ ພັດທະນາ ຊາວໜຸ່ມລາວ;

2. ການເຄື່ອນໄຫວ, ການກະທຳ, ການດຳລົງຊີວິດ, ການພົວພັນສັງຄົມ ຂອງຊາວໜຸ່ມລາວ;

3. ການເຄື່ອນໄຫວຂອງການຈັດຕັ້ງຊາວໜຸ່ມລາວ.

**ມາດຕາ 58 ຮູບການ ການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາຕາມແຜນການຢ່າງເປັນປົກກະຕິ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນການກວດກາຕາມ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳຂອງຄະນະກວດກາຊາວໜຸ່ມ ແລະ ຄຳສະເໜີຂອງອົງການກວດກາພາຍນອກ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ກ່ອນລ່ວງໜ້າ.

ການກວດກາວຽກງານຂອງຊາວໜຸ່ມລາວ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 59 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 60 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຈະໄດ້ຮັບການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ພາກທີ IX
## ບົດບັນຍັດສຸດທ້າຍ

### ມາດຕາ 61 ການຈັດຕັ້ງປະຕິບັດ

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ແລະ ສະຫະພັນຊາວໜຸ່ມລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

### ມາດຕາ 62 ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້